

**ຊື່ຜູ້ສະໝັກ:** Ry Armstrong (ພວກເຂົາ/ພວກເຂົາ)

**ຊື່ແຄມເປນ:** Armstrong ສໍາລັບທຸກຄົນ

**ເວັບໄຊແຄມເປນ:** [armstrongforall.com](http://armstrongforall.com)

**ຕໍາແໜ່ງຢູ່ໃນເມືອງ:** ເຈົ້າເມືອງ Seattle

**ເບີໂທລະສັບແຄມເປນ:** +1 206-657-6287

ໃນນາມຂວັນໃຈເມືອງ Seattle, ຂ້າພະເຈົ້າຂໍຢືນຢັນໃນຖານະການຈັດຕັ້ງຊາວຜູ້ອອກແຮງງານ, ຂໍເດີນຕາມຮອຍຕີນຂອງຄອບຄົວຂອງຂ້າເຈົ້າ. ຂ້າພະເຈົ້າບໍ່ເຄີຍທໍ້ຖອຍຈາກສິ່ງທ້າທາຍຕ່າງໆ. ຂ້າພະເຈົ້າໄດ້ໃຊ້ເວລາຫຼາຍປີຕໍ່ສູ້ເພື່ອສິດທິຂອງຊາວຜູ້ອອກແຮງງານ, ທີ່ຢູ່ອາໄສທີ່ສາມາດຈັດຊື້ໄດ້ ແລະ ການສະແດງສິລະປະ. ໃນຖານະເປັນຜູ້ອໍານວຍການຮ່ວມແບບຍືນຍົງຂອງເມືອງ Seattle , ຂ້າພະເຈົ້າຂໍເຮັດວຽກງານນີ້ເພື່ອໃຫ້ຕົວເມືອງກາຍເປັນເມືອງທີ່ສະອາດ ແລະ ມີຄວາມຍຸຕິທໍາທີ່ປົກປ້ອງຊັບສິນທີ່ມີຄ່າທີ່ສຸດໃນບັນດາພວກເຮົາ. ເປັນເວລາ 5 ປີມາແລ້ວ, ທີ່ຂ້າພະເຈົ້າໄດ້ຈັດຕັ້ງສະຫະພັນແຮງງານ ແລະ ປະຈຸບັນໄດ້ຮັບໜ້າທີ່ຢູ່ໃນສະພາ AFL-CIO ແຫ່ງຊາດຂອງ AEA, ຕາງໜ້າໃຫ້ພະນັກງານທີ່ມີຄວາມສ້າງສັນ 50,000 ຄົນເພື່ອຊຸກຍູ້ໃຫ້ມີຄ່າຈ້າງທີ່ຍຸຕິທໍາ, ຄວາມປອດໄພ ແລະ ຜົນປະໂຫຍດ. ຊ່ວງເວລາທີ່ຂ້າພະເຈົ້າຢູ່ໃນຄະນະກໍາມະການ LGBTQ ແຫ່ງເມືອງ Seattle ແລະ ຊ່ວງປີແຫ່ງການການສົ່ງເສີມສະໜັບສະໜູນໄດ້ສອນໃຫ້ຂ້າພະເຈົ້າວ່າອົງການປົກຄອງເມືອງຄວນເຮັດເຮັດວຽກແນວໃດ. ຂ້າພະເຈົ້າເຊື່ອວ່າການຂົນສົ່ງສາທາລະນະຄວນໃຫ້ຄ່າໂດຍສານຫຼຸດລົງ ຫຼື ບໍ່ເສຍຄ່າເພື່ອຊ່ວຍຄອບຄົວທີ່ເຮັດວຽກໄປໄດ້ທົ່ວເມືອງຂອງພວກເຮົາ ແລະ ຫຼຸດຜ່ອນການປ່ອຍຄວັນພິດເພື່ອຊ່ວຍການປ່ຽນແປງຂອງດິນຟ້າອາກາດ. ຂ້າພະເຈົ້າໄດ້ຕັ້ງເປົ້າທີ່ຈະເພີ່ມທີ່ພັກອາໄສພາຍໃນ 100 ວັນທໍາອິດຂອງຂ້າພະເຈົ້າ. ການປ່ຽນແປງກົດລະບຽບການນໍາໃຊ້ທີ່ດິນຈະຊ່ວຍໃຫ້ພວກເຮົາສ້າງສູນດູແລເດັກ ແລະ ສ້າງໃຫ້ Seattle ເຂັ້ມແຂງຂຶ້ນ. ຂ້າພະເຈົ້າຈະບໍ່ຍອມແພ້ໃນປີ 2025—ເມືອງຂອງພວກເຮົາພ້ອມທີ່ຈະຕໍ່ສູ້ເພື່ອອະນາຄົດທີ່ດີກວ່າ. ຂ້າພະເຈົ້າຮ້ອງຂໍການສະໜັບສະໜູນຈາກທ່ານ. ມາໃຫ້ຄວາມສໍາຄັນກັບປະຊາຊົນກ່ອນ. ຈົ່ງສາມັກຄີກັນ!

*ຜູ້ສະໝັກຄົນນີ້ກໍາລັງເຂົ້າຮ່ວມໂຄງການບັດປະມູນປະຊາທິປະໄຕ.*



**ຊື່ຜູ້ສະໝັກ:** Bruce Harrell

**ຊື່ແຄມເປນ:** Bruce ສໍາລັບ Seattle

**ເວັບໄຊທ໌ແຄມເປນ:** [BruceforSeattle.com](BruceforSeattle.com)

**ຕໍາແໜ່ງ:** ເຈົ້າຄອງນະຄອນ Seattle

**ເບີໂທລະສັບແຄມເປນ:** 206-569-8486

ຂ້ອຍຮູ້ສຶກເປັນກຽດຕິທີ່ໄດ້ຮັບໃຊ້ບໍລິການເປັນນາຍົກນະຄອນຂອງເຈົ້າ! ຮ່ວມມືກັບພະນັກງານເມືອງຜູ້ອຸທິດໃຫ້ກັບການເຮັດວຽກ, ພວກເຮົາມຸ່ງໝັ້ນທີ່ຈະສ້າງ Seattle ໃຫ້ເປັນເມືອງທີ່ປອດໄພ, ມີຄ່າຄອງຊີວິດທີ່ເຂົ້າເຖິງໄດ້, ແລະ ຕ້ອນຮັບທຸກຄົນ.

ຂ້ອຍພູມໃຈກັບຄວາມສໍາເລັດຂອງພວກເຮົາຈົນເຖິງຕອນນີ້:

●ການລົງທຶນຢ່າງເປັນໜມອດໃນທີ່ຢູ່ອາໄສທີ່ມີລາຄາສົມເຫດສົມຜົນ, ລວມທັງທີ່ຢູ່ສະໜັບສະໜູນສໍາລັບຜູ້ທີ່ມີຄວາມສ່ຽງສູງທີ່ສຸດ, ພ້ອມສ້າງບ້ານພັກອີກນັບພັນຫຼັງ ສໍາລັບຜູ້ເຮັດວຽກ ແລະ ຄອບຄົວ.

● ການປັບປຸງຄວາມປອດໄພສາທາລະນະ, ລວມທັງການເພີ່ມບຸກຄະລາກອນຂອງຕໍາຫຼວດ Seattle; ການສ້າງທີມ CARE ສໍາລັບການຕອບສະໜອງທີ່ເປັນມະນຸດ ແລະ ປາສະຈາກອາວຸດ ໃຫ້ແກ່ຜູ້ທີ່ມີຄວາມຈໍາເປັນ; ພ້ອມທັງການລົງທຶນໃນຄວາມປອດໄພຂອງເດັກໜຸ່ມສາວ ແລະ ມາດຕະການປ້ອງກັນຄວາມຮຸນແຮງຈາກອາວຸດປືນ.

● ການປະຕິບັດມາດຕະການດ່ວນເພື່ອພັດທະນາສະພາບອາກາດ, ຊ່ວຍໃຫ້ອາຄານສະອາດຂຶ້ນ, ປັບປຸງການເຂົ້າເຖິງຂົນສົ່ງສາທາລະນະ ແລະ ສ້າງທາງເດີນທ້າວທີ່ປອດໄພ, ຂະຫຍາຍສະຖານທີ່ຊາຈໄຟຟ້າສໍາລັບລົດໄຟຟ້າ, ແລະ ປູກຕົ້ນໄມ້ໃໝ່ນ

●ໃຫ້ຄວາມສໍາຄັນກັບບໍລິການພື້ນຖານ – ປັບປຸງຖະໜົນ, ຍົກລະດັບປະສິດທິພາບໃນການອະນຸຍາດ, ແລະ ສະໜັບສະໜູນທຸລະກິດນ້ອຍໃຫ້ເຕີບໂຕຢ່າງຄຶກຄືນ.

ດ້ວຍບັດຄູປອງ ແລະ ຄະແນນສຽງຂອງເຈົ້າ, ພວກເຮົາຈະຍັງຄົງນໜ້າຕໍ່ໄປ!

● ຂະຫຍາຍທີ່ຢູ່ອາໄສທີ່ມີລາຄາສົມເຫດສົມຜົນ – ຈາກບ້ານທີ່ເໝາະສົມສໍາລັບຄອບຄົວໃກ້ໂຮງຮຽນ ຈົນເຖິງຫ້ອງເຊົ່າ ແລະ ຄອນໂດທີ່ມີການເຂົ້າເຖິງຂົນສົ່ງສາທາລະນະ; ພວກເຮົາຈໍາເປັນຕ້ອງເພີ່ມການເຂົ້າເຖິງ, ຫຼຸດຄ່າໃຊ້ຈ່າຍ, ແລະ ສ້າງໂອກາດໃນການສ້າງຄວາມມັ່ງຄັ່ງຂ້າມລຸ້ນສູ່ລຸ້ນ.

● ຄວາມຄືບໜ້າດ້ານຄວາມປອດໄພ – ການຮັບສະໝັກບຸກຄະລາກອນ SPD, ຂະຫຍາຍທີມ CARE, ລົດຜ່ອນຄວາມຮຸນແຮງ, ແລະ ຈັດການກັບບັນຫາ fentanyl ແລະ ການໃຊ້ສານເສບຕິດ.

●ຂັບເຄື່ອນອະນາຄົດຂອງ Seattle ຢ່າງໄວຂຶ້ນ – ຂະຫຍາຍລະບົບລົດໄຟຟ້າຈາກ West Seattle ຫາ Ballard, ສໍາເລັດໂຄງການ Waterfront, ອອກແບບໃໝ່ສູນ Seattle Center, ພ້ອມທັງຟື້ນຟູພື້ນທີ່ downtown ໃຫ້ກັບຄວາມມະຫັດສະຈັງຂອງ Emerald City ຢ່າງແທ້ຈິງ.

ຂ້ອຍຂໍການສະໜັບສະໜູນຂອງເຈົ້າຢ່າງຕໍ່ເນື່ອງ.

*ຜູ້ສະໝັກຄົນນີ້ກຳລັງເຂົ້າຮ່ວມໂຄງການບັດປະມູນປະຊາທິປະໄຕ.*



ຊື່ຜູ້ສະໝັກຮັບເລືອກຕັ້ງ: Joe Mallahan

ຊື່ແຄມເປນ: Mallahan for Mayor

ເວັບໄຊແຄມເປນ: joemallahanforseattlemayor.com

ຕຳແໜ່ງໃນເມືອງ: ນາຍົກເທດສະມົນຕີເມືອງ Seattle

ເບີໂທລະສັບແຄມເປນ: 206.229.8149

ຂ້າພະເຈົ້າລົງສະໝັກຊິງຕຳແໜ່ງນາຍົກເທດສະມົນຕີເມືອງ ເພາະວ່າຂ້າພະເຈົ້າເຊື່ອວ່າເມືອງ Seattle ສາມາດບັນລຸຄວາມສຳເລັດຕາມອຸດົມຄະຕິໄດ້.
ໂດຍການມີລັດຖະບານບໍລິຫານບ້ານເມືອງທີ່ມີປະສິດທິພາບຫຼາຍຂຶ້ນກວ່າເກົ່າ, ເມືອງ Seattle ສາມາດເປັນຕົ້ນແບບແຫ່ງຄວາມກ້າວໜ້າລະດັບປະເທດໄດ້ ແລະ ເປັນພະລັງຕ້ານທານຄວາມວຸ່ນວາຍ ແລະ ຄວາມໂຫດຮ້າຍຂອງຂະບວນການເຄື່ອນໄຫວທາງການເມືອງ MAGA ເຊັ່ນກັນ.

ໃນຖານະນາຍົກເທດສະມົນຕີ, ຂ້າພະເຈົ້າຈະເຮັດໃຫ້ເມືອງນີ້ເຮັດວຽກຮັບໃຊ້ພວກເຮົາທຸກຄົນ. ພວກເຮົາຕ້ອງປັບປຸງຄວາມປອດໄພຂອງສາທາລະນະຢ່າງຫຼວງຫຼາຍໂດຍມີການກຳກັບດູແລຈາກຕຳຫຼວດຢ່າງແທ້ຈິງ ແລະ ສ້າງຄວາມໄວ້ວາງໃຈໃຫ້ກັບຊຸມຊົນຄືນມາໃໝ່. ຂ້າພະເຈົ້າຈະຮ່ວມຕະເວນນັ່ງລົດຕຳຫຼວດສາຍກວດ 50 ຄັ້ງໃນປີທຳອິດ ເພື່ອໃຫ້ເຂົ້າໃຈເຖິງສິ່ງທີ່ເກີດຂຶ້ນຈິງໆຢູ່ທ້ອງຖະໜົນຂອງພວກເຮົາ.

ຂ້າພະເຈົ້າຈະຫຼຸດຂັ້ນຕອນການຕິດຕໍ່ງານກັບລັດຖະບານ, ເລັ່ງການສ້າງທີ່ຢູ່ອາໄສ ແລະ ລົງທຶນໃນໂຄງການທີ່ຮັບໃຊ້ຄອບຄົວຂອງຄົນເຮັດວຽກ.
ຂ້າພະເຈົ້າຈະນຳເອົາເຄຣດິດພາສີຂອງລັດຖະບານກາງເພື່ອສ້າງເຮືອນທີ່ມີລາຄາບໍ່ແພງ, ຂະຫຍາຍການເຂົ້າເຖິງການປິ່ນປົວສຸຂະພາບຈິດ ແລະ ການບຳບັດສິ່ງເສບຕິດ ແລະ ຈັດຫາຕຽງສຸກເສີນ 5,000 ຕຽງໃນປີທຳອິດຂອງຂ້າພະເຈົ້າ ເນື່ອງຈາກການບຳ
ບັດສິ່ງເສບຕິດບໍ່ສາມາດເຮັດໄດ້ໃນເວລາທີ່ຜູ້ຕິດຢາອາໄສຢູ່ຕາມຖະໜົນ.

ຂ້າພະເຈົ້າເປັນຕົວແທນຂອງການປ່ຽນແປງຕະຫຼອດອາຊີບການງານຂອງຕົນດ້ວຍການພິກຟື້ນທຸລະກິດຂະໜາດກາງໂດຍເຮັດວຽກແບບຄຽງບ່າຄຽງໄຫລ່ກັບພະນັກງານແນວໜ້າ. ທີ່ບໍລິສັດ T-Mobile ຂ້າພະເຈົ້າໄດ້ມີໂອກາດຟັງຕົວແທນຝ່າຍບໍລິການລູກຄ້າ ແລະ ມອບສິດການເຂົ້າເຖິງສິນເຊື່ອ ແລະ ອັດຕາດອກເບ້ຍຕໍ່າໃຫ້ກັບຫຼາຍລ້ານຄອບຄົວທີ່ມີລາຍໄດ້ຕໍ່າ. ໃນຖານະນັກຈັດງານຊຸມຊົນ, ຂ້າພະເຈົ້າໄດ້ນຳພາປະຊາຊົນມາຮ່ວມກັນເພື່ອແກ້ໄຂບັນຫາໃນເມືອງໃຫຍ່.

ພວກເຮົາສາມາດແກ້ໄຂບັນຫາການບໍ່ມີເຮືອນຢູ່ດ້ວຍຄວາມເມດຕາ ແລະ ຄວາມເຫັນອົກເຫັນໃຈ ແລະ ເຮັດໃຫ້ເມືອງ Seattle ມີຄວາມປອດໄພ ແລະ ລາຄາບໍ່ແພງ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກຳລັງເຂົ້າຮ່ວມໂຄງການບັດກຳນັນສະໜັບສະໜູນປະຊາທິປະໄຕ.*



**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Joe Molloy

**ຊື່ແຄມເປນ:** Joe Molloy for Mayor

**ເວັບໄຊແຄມເປນ:** [joemolloyformayor.com](joemolloyformayor.com)

**ຕຳແໜ່ງໃນເມືອງ:** ນາຍົກເທດສະມົນຕີເມືອງ Seattle

**ເບີໂທລະສັບແຄມເປນ:** joemolloyformayor.com

ຂ້າພະເຈົ້າຊື່ Joe Molloy ເປັນຜູ້ສະໜັບສະໜູນດ້ານທີ່ຢູ່ອາໄສແລະຄວາມພິການ, ເປັນນັກຄິດທີ່ມີວິໄສທັດເປັນລະບົບ ແລະ ເປັນຜູ້ນຳທີ່ໄດ້ຮັບການຫຼໍ່ຫຼອມຈາກປະສົບການຈິງຈາກແນວໜ້າຂອງລະບົບທີ່ລົ້ມເຫຼວ.

ຂ້າພະເຈົ້າບໍ່ແມ່ນນັກການເມືອງອາຊີບ, ແຕ່ເປັນລັດຖະກອນທີ່ຂັບເຄື່ອນດ້ວຍຄວາມຮູ້ສຶກຮີບດ່ວນຢ່າງເລິກເຊິ່ງ. ຂ້າພະເຈົ້າລົງສະໝັກຮັບເລືອກຕັ້ງເພື່ອແກ້ໄຂບັນຫາ ແລະ ທ້າຍທີ່ສຸດແມ່ນເພື່ອຢຸຕິວິກິດການຄົນບໍ່ມີທີ່ຢູ່ອາໄສທີ່ຄອບງຳເມືອງຂອງພວກເຮົາ.

ຂ້າພະເຈົ້າໄດ້ຍ້າຍມາຢູ່ເມືອງຊີແອດເທິລດ້ວຍຄວາມຕັ້ງໃຈ, ເພາະເຊື່ອວ່າທີ່ນີ້ເປັນໜຶ່ງໃນສະຖານທີ່ຈຳນວນໜ້ອຍໃນໂລກທີ່ຂ້າພະເຈົ້າສາມາດສະແດງຕົວຕົນຂອງຕົນເອງອອກມາໄດ້ຢ່າງເຕັມທີ່. ຂ້າພະເຈົ້າຮູ້ວ່າຄົນອື່ນໆອີກຫຼາຍຄົນເອີ້ນເມືອງນີ້ວ່າບ້ານດ້ວຍເຫດຜົນດຽວກັນ. ແຕ່ທຸກຄົນຮູ້ດີວ່າລະບົບຂອງພວກເຮົາບໍ່ກົງກັບອຸດົມຄະຕິຂອງພວກເຮົາ.

ແຕ່ພວກເຮົາສາມາດສ້າງເມືອງໃຫ້ກົງກັບອຸດົມຄະຕິຂອງພວກເຮົາໄດ້, ຖ້າພວກເຮົາເຕັມໃຈ ແລະ ມຸ່ງໝັ້ນທີ່ຈະເຮັດ.

ແຄມເປນຂອງພວກເຮົາບໍ່ພຽງແຕ່ກ່ຽວກັບການແກ້ໄຂບັນຫາຄົນບໍ່ມີທີ່ຢູ່ອາໄສເທົ່ານັ້ນ, ແຕ່ເປັນການສ້າງເມືອງທີ່ມີການບໍລິການທາງສັງຄົມທີ່ຄອບຄຸມ ແລະ ບໍ່ແບ່ງແຍກ, ເຊິ່ງເຮັດໃຫ້*ຄົນທີ່ຈະກາຍເປັນຄົນບໍ່ມີທີ່ຢູ່ອາໄສ*ເປັນເລື່ອງທີ່ເປັນໄປບໍ່ໄດ້ອີກຕໍ່ໄປ. ຂ້າພະເຈົ້າເຊື່ອວ່າພວກເຮົາຈະເປັນເມືອງທີ່ນຳທາງ. ນັ້ນເປັນຕົວຢ່າງໃຫ້ກັບເມືອງອື່ນໆໄດ້.

ຖ້າພວກເຮົາແກ້ໄຂບັນຫາການບໍ່ມີທີ່ຢູ່ອາໄສໄດ້, ພວກເຮົາບໍ່ພຽງແຕ່ແກ້ໄຂວິກິດການໜຶ່ງເທົ່ານັ້ນ, ແຕ່ເປັນການວາງຮາກຖານສຳລັບອະນາຄົດທີ່ປອດໄພ, ຍືນຍົງ ແລະ ອີກຫຼາຍຢ່າງໃຫ້ເປັນໄປໄດ້ອີກເຊັ່ນກັນ.

ນັ້ນແມ່ນເຫດຜົນທີ່ຂ້າພະເຈົ້າມາທີ່ນີ້ເພື່ອສ້າງ ແລະ ນັ້ນແມ່ນເຫດຜົນທີ່ຂ້າພະເຈົ້າຂໍຮັບການສະໜັບສະໜູນຈາກທ່ານ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກຳລັງເຂົ້າຮ່ວມໂຄງການບັດກຳນັບສະໜັບສະໜູນປະຊາທິປະໄຕ.*



**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Katie Wilson

**ຊື່ແຄມເປນ:** Wilson for Seattle

**ເວັບໄຊແຄມເປນ:** wilsonforseattle.com

**ຕໍາແໜ່ງໃນເມືອງ:** ນາຍົກເທດສະມົນຕີເມືອງ Seattle

**ເບີໂທລະສັບແຄມເປນ:** 607- 301 - 1836

ຂ້າພະເຈົ້າຊື່ Katie Wilson ແລະຂ້າພະເຈົ້າກໍາລັງລົງສະໝັກຊິງຕໍາແໜ່ງນາຍົກເທດສະມົນຕີຄົນຕໍ່ໄປຂອງເມືອງ Seattle.

ຂ້າພະເຈົ້າໃຊ້ເວລາ 14 ປີທີ່ຜ່ານມາໃນເສັ້ນທາງອາຊີບຂອງຂ້າພະເຈົ້າເອງໃນການສ້າງ ແລະນໍາພາພັນທະມິດເພື່ອໄຊຊະນະອັນຍິ່ງໃຫຍ່ສໍາລັບຄອບຄົວຂອງຜູ້ທີ່ເຮັດວຽກ: ການເພີ່ມຄ່າແຮງງານຂັ້ນຕໍ່າ, ການຄຸ້ມຄອງຜູ້ເຊົ່າທີ່ເຂັ້ມແຂງຂຶ້ນ, ທີ່ຢູ່ອາໄສທີ່ມີລາຄາບໍ່ແພງ, ການຂົນສົ່ງສາທາລະນະທີ່ດີຂຶ້ນ ແລະຈັດເກັບພາສີກັບຜູ້ທີ່ສາມາດຈ່າຍໄດ້ ແທນທີ່ຈະເກັບຈາກພວກເຮົາທີ່ເຫຼືອທີ່ຈ່າຍຫຼາຍເກີນໄປຢູ່ແລ້ວ. ຂ້າພະເຈົ້າຮູ້ວິທີທີ່ຈະລວມພະລັງປະຊາຊົນ ໂດຍກ້າວຂ້າມຜ່ານຄວາມແຕກຕ່າງເພື່ອບັນລຸສິ່ງທີ່ຍິ່ງໃຫຍ່.

ນາຍົກເທດສະມົນຕີຄົນປັດຈຸບັນເປັນນັກການເມືອງຢູ່ໃນສາລາກາງຂອງເມືອງມາຕັ້ງແຕ່ປີ 2008. ຕະຫຼອດໄລຍະເວລານັ້ນ, ຄ່າເຊົ່າ ຫຼື ລາຄາເຮືອນໃນເມືອງ Seattle ໄດ້ເພີ່ມຂຶ້ນຫຼາຍກວ່າສອງເທົ່າ ແລະມີຄົນຈໍານວນຫຼາຍທີ່ບໍ່ມີບ່ອນຢູ່ອາໄສໄດ້ອາໄສຢູ່ຂ້າງຖະໜົນຂອງພວກເຮົາຫຼາຍກວ່າແຕ່ກ່ອນ.

ເຊິ່ງບໍ່ຈໍາເປັນຕ້ອງເປັນແບບນີ້. ພວກເຮົາຈະສ້າງບ້ານໃຫ້ພວກເຮົາທຸກຄົນ. ພວກເຮົາຈະມີຊຸມຊົນທີ່ມີຊີວິດຊີວາ ແລະໜ້າຢູ່ອາໄສ. ພວກເຮົາສາມາດປະກອບທຸລະກິດຂະໜາດນ້ອຍທີ່ຈະເລີນຮຸ່ງເຮືອງໄດ້. ພວກເຮົາຈະມີຖະໜົນຫົນທາງທີ່ໃຫ້ຄວາມຮູ້ສຶກປອດໄພໄດ້ ເພາະຖະໜົນເຫຼົ່ານັ້ນປອດໄພ. ພວກເຮົາຈະປົກປ້ອງຊຸມຊົນຜູ້ອົບພະຍົບ ແລະສ້າງໂອກາດສໍາລັບທຸກຄົນ. ພວກເຮົາສາມາດເຮັດສິ່ງນີ້ໄດ້ຮ່ວມກັນໄດ້. ແຕ່ເມືອງ Seattle ຕ້ອງການຜູ້ນໍາຄົນໃໝ່.

ນີ້ແມ່ນເມືອງຂອງທ່ານ. ຂ້າພະເຈົ້າຕ້ອງການທີ່ຈະນໍາພາພະລັງ ແລະປາກສຽງຂອງທ່ານໄປສູ່ສາລາກາງເມືອງ. ຂໍເຊີນທ່ານມາເຂົ້າຮ່ວມກັບຂ້າພະເຈົ້າ ແລະເຮັດສິ່ງນີ້ໃຫ້ສໍາເລັດ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກໍາລັງເຂົ້າຮ່ວມໂຄງການບັດກໍານັນສະໜັບສະໜູນປະຊາທິປະໄຕ.*



**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Isaiah Willoughby

**ຊື່ແຄມເປນ:** The People's Voice

**ເວັບໄຊແຄມເປນ:**

**ຕຳແໜ່ງ:** ນາຍົກເທດສະມົນຕີ

**ເບີໂທລະສັບແຄມເປນ:** (206) 228-4802

ສະບາຍດີ, ຊາວເມືອງ Seattle. ຂ້າພະເຈົ້າຊື່ Isaiah Willoughby ແລະ ຂ້າພະເຈົ້າກຳລັງລົງສະໝັກຊິງຕຳແໜ່ງນາຍົກເທດສະມົນຕີຄົນຕໍ່ໄປຂອງທ່ານ.

ຂ້າພະເຈົ້າບໍ່ແມ່ນນັກການເມືອງລະດັບມືອາຊີບ—ແຕ່ຂ້າພະເຈົ້າເປັນສະມາຊິກໃນຊຸມຊົນທີ່ເຂົ້າໃຈເຖິງຄວາມທ້າທາຍທີ່ແທ້ຈິງທີ່ເມືອງຂອງພວກເຮົາກຳລັງປະເຊີນ. ຂ້າພະເຈົ້າເຄີຍເຮັດວຽກດ້ານທີ່ຢູ່ອາໄສ, ເຄີຍສຶກສາລະບົບ ແລະ ໄດ້ປະສົບບັນຫາຄ່າໃຊ້ຈ່າຍທີ່ເພີ່ມຂຶ້ນ ແລະ ນະໂຍບາຍທີ່ບໍ່ໄດ້ຜົນ.

ຂ້າພະເຈົ້າຈົບປະລິນຍາຕີດ້ານອະສັງຫາລິມະຊັບຈາກວິທະຍາໄລ North Seattle College ແລະ ມີປະສົບການໃນການເປັນຜູ້ປະກອບການ ແລະ ການຈັດຕັ້ງຊຸມຊົນ. ຂ້າພະເຈົ້າຮູ້ເຖິງບັນຫາຕ່າງໆ ເພາະວ່າຂ້າພະເຈົ້າໄດ້ປະເຊີນກັບບັນຫາເຫຼົ່ານັ້ນມາແລ້ວ—ແລະ ຂ້າພະເຈົ້າຮູ້ວ່າວິທີແກ້ໄຂທີ່ແທ້ຈິງມາຈາກການຟັງຜູ້ທີ່ໄດ້ຮັບຜົນກະທົບໂດຍກົງ.

ໃນຖານະນາຍົກເທດສະມົນຕີ, ຂ້າພະເຈົ້າຈະມຸ່ງເນັ້ນໄປທີ່:

- ທີ່ຢູ່ອາໄສທີ່ມີລາຄາບໍ່ແພງ
- ຄວາມປອດໄພສາທາລະນະທີ່ສ້າງຄວາມໄວ້ວາງໃຈໃຫ້ກັບຊຸມຊົນ
- ເສດຖະກິດທ້ອງຖິ່ນທີ່ເຂັ້ມແຂງທີ່ຊ່ວຍໃຫ້ຄອບຄົວຂອງຄົນເຮັດວຽກ ແລະ ທຸລະກິດຂະໜາດນ້ອຍຈະເລີນເຕີບໂຕ

ແຄມເປນນີ້ເອີ້ນວ່າ "The People's Voice" ເພາະວ່າຂ້າພະເຈົ້າເຊື່ອຜູ້ນຳຄວນຈະເປີດເຜີຍ, ໂປ່ງໃສ ແລະ ມີຮາກຖານຈາກການບໍລິການ —ບໍ່ແມ່ນການເມືອງຕາມປົກກະຕິທົ່ວໄປ.

ດ້ວຍການຮ່ວມມືກັນ ພວກເຮົາຈະສາມາດສ້າງເມືອງ Seattle ໃຫ້ເປັນບ່ອນທີ່ປາກສຽງຂອງທຸກຄົນຈະມີການຮັບຟັງ, ໄດ້ຮັບການສະໜັບສະໜູນ ແລະ ໄດ້ຮັບພະລັງອຳນາດ.

ຂໍຂອບໃຈສຳລັບຄວາມໄວ້ວາງໃຈ ແລະ ຄະແນນສຽງຂອງທ່ານ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກໍາລັງເຂົ້າຮ່ວມໂຄງການບັດກໍານັບສະໜັບສະໜູນປະຊາທິປະໄຕ.*



**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Ann Davison

**ຊື່ແຄມເປນ:** Neighbors for Ann

**ເວັບໄຊແຄມເປນ:** https://neighborsforann.com/

**ຕໍາແໜ່ງປະຈໍາເມືອງ:** ຜູ້ສະໝັກຮັບເລືອກຕັ້ງສໍາລັບຕໍາແໜ່ງໄອຍະການເມືອງ

**ເບີໂທລະສັບແຄມເປນ:** (206) 257 - 2206

ການປະຕິບັດໜ້າທີ່ໃນຕໍາແໜ່ງໄອຍະການເມືອງຊີແອດເທິລຕັ້ງແຕ່ປີ 2022 ຖືວ່າເປັນກຽດສັກສີອັນໃຫຍ່ຫຼວງ ແລະ ເຮັດໃຫ້ຂ້າພະເຈົ້າສືບຕໍ່ມີພະລັງທີ່ຈະມຸ່ງເນັ້ນໃນການປັບປຸງຄວາມປອດໄພສາທາລະນະໃນເມືອງຊີແອດເທິລ. ບໍ່ວ່າຈະເປັນການມຸ່ງເນັ້ນໂດຍໃຫ້ຜູ້ກະທໍາຜິດຄະດີລະຫຸໂຫດກັບຄືນມາຮັບຜິດຊອບການກະທໍາຜິດໃນເວລາຈິງໃນລະບົບຍຸຕິທໍາທາງອາຍາຂອງພວກເຮົາ, ເຮັດວຽກຮ່ວມກັບຜູ້ອອກກົດໝາຍຫຼືສະພາເທດສະບານເມືອງເພື່ອປັບປຸງກົດຫມາຍຕ່າງໆ ຫຼືການເຮັດວຽກຂອງລັດຖະບານຂອງພວກເຮົາ, ຂ້າພະເຈົ້າໄດ້ມຸ່ງເນັ້ນວິທີທີ່ຈະເຮັດໃຫ້ລະບົບຂອງພວກເຮົາເຮັດວຽກໄດ້ຢ່າງມີປະສິດທິພາບຫຼາຍຂຶ້ນ ເພື່ອສົ່ງມອບບໍລິການໃຫ້ກັບປະຊາຊົນ. ຂ້າພະເຈົ້າໄດ້ຊຸກຍູ້ການອອກກົດໝາຍເພື່ອປົກປ້ອງພື້ນທີ່ສາທາລະນະຂອງເມືອງຂອງພວກເຮົາໃຫ້ເປັນພື້ນທີ່ຫ່າງໄກຈາກຢາເສບຕິດແລະພື້ນທີ່ຄ້າປະເວນີ, ຂັດຂວາງບັນດາອົງກອນອາຊະຍາກໍາທີ່ສະແຫວງຫາຜົນປະໂຫຍດຈາກຜູ້ຄົນທີ່ເປາະບາງ. ຂ້າພະເຈົ້າເຮັດໃຫ້ຫ້ອງການໄອຍະການຢູ່ໃນລະດັບແນວໜ້າທີ່ມີຄວາມໂປ່ງໃສຂອງຂໍ້ມູນຢ່າງທີ່ບໍ່ເຄີຍມີມາກ່ອນ ແລະການເຂົ້າເຖິງຊຸມຊົນເພື່ອໃຫ້ປະຊາຊົນໄດ້ຮັບຮູ້ຂໍ້ມູນກ່ຽວກັບວຽກງານຂອງຂ້າພະເຈົ້າແລະພື້ນຖານໃນການຕັດສິນໃຈຂອງຂ້າພະເຈົ້າ. ດ້ວຍຈຸດປະສົງດ້ານຄວາມປອດໄພສາທາລະນະ ຂ້າພະເຈົ້າໄດ້ສັ່ງຟ້ອງຜູ້ຜະລິດລົດຍົນທີ່ເອົາລົດລາຄາຖືກທີ່ສຸດເຂົ້າມາຂາຍໃນຕະຫຼາດຂອງພວກເຮົາ ເຊິ່ງມີຄວາມສ່ຽງຢ່າງຫຼວງຫຼາຍທີ່ລົດຈະຖືກໂຈລະກໍາ. ຂ້າພະເຈົ້າໄດ້ນໍາເງິນຈໍານວນ 160 ລ້ານໂດລາຈາກບໍລິສັດຍັກໃຫຍ່ດ້ານເຄມີພັນມາທີ່ເມືອງຊີແອດເທິລເພື່ອໃຊ້ຈ່າຍໃນການທໍາຄວາມສະອາດສິ່ງແວດລ້ອມໃນພື້ນທີ່ລະແວກດູວາມິຊ ເຊິ່ງເປັນການຕັ້ງຖິ່ນຖານຊຸມຊົນທີ່ໃຫຍ່ທີ່ສຸດໃນປະເທດ. ຂ້າພະເຈົ້າຢູ່ທີ່ນີ້ເພື່ອປົກປ້ອງເມືອງຊີແອດເທິລແລະກົດໝາຍຂອງເມືອງ ແລະຈະບໍ່ອິດເມື່ອຍ ຫຼື ຢຸດເຊົາການດໍາເນີນການໃດໆຖ້າຂ້າພເຈົ້າໄດ້ຮັບການເລືອກຕັ້ງອີກຄັ້ງ.

*ຜູ້ສະໝັກຄົນນີ້ກໍາລັງເຂົ້າຮ່ວມໂຄງການບັດກໍານັນສະໜັບສະໜູນປະຊາທິປະໄຕ (Democracy Voucher Program).*



**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Erika Evans

**ຊື່ແຄມເປນ:** Elect Erika Evans

**ເວັບໄຊແຄມເປນ:** [www.ElectErikaEvans.com](http://www.ElectErikaEvans.com)

**ຕໍາແໜ່ງໃນເມືອງ:** ໄອຍະການເມືອງ

**ອີເມວແຄມເປນ:** info@ElectErikaEvans.com

ຂ້າພະເຈົ້າກໍາລັງລົງສະໝັກຊິງຕໍາແໜ່ງໄອຍະການເມືອງຊີແອດເທິລຄົນຕໍ່ໄປຂອງທ່ານ ເພາະຂ້າພະເຈົ້າຮັກເມືອງນີ້ ແລະ ຮູ້ວ່າພວກເຮົາຈະສາມາດພັດທະນາເມືອງໃຫ້ຈະເລີນຂຶ້ນກວ່ານີ້ໄດ້. ຂ້າພະເຈົ້າເກີດໃນຄອບຄົວທີ່ຍຶດໝັ້ນໃນສິດທິພົນລະເມືອງ ແລະ ສິດທິທາງເສດຖະກິດ ແລະ ຂ້າພະເຈົ້າໄດ້ຜ່ານຄວາມຍາກລໍາບາກທີ່ຊຸມຊົນຂອງພວກເຮົາຕ້ອງປະເຊີນ. ຂ້າພະເຈົ້າໄດ້ໃຊ້ຊີວິດການເຮັດວຽກຂອງຂ້າພະເຈົ້າໃນການປົກປ້ອງສິດທິຂອງພວກເຮົາ ແລະ ການອອກກົດໝາຍທີ່ເຮັດໃຫ້ປະຊາຊົນປອດໄພຂຶ້ນ.

ຂ້າພະເຈົ້າເປັນຜູ້ສະໝັກພຽງຄົນດຽວທີ່ໄດ້ເຮັດວຽກຢູ່ໃນພະແນກສານອາຍາ ແລະ ພະແນກສານແພ່ງຂອງຫ້ອງການໄອຍະການເມືອງຊີແອດເທິລ. ຂ້າພະເຈົ້າຮູ້ວ່າຫ້ອງການນີ້ເຮັດວຽກແນວໃດ ແລະ ຮູ້ວິທີສົ່ງມອບການປ່ຽນແປງທີ່ແທ້ຈິງ. ໃນຖານະຜູ້ພິພາກສາຊົ່ວຄາວຂອງສານເທດສະບານເມືອງ ຂ້າພະເຈົ້າໄດ້ຮັບຮູ້ວ່າຄວາມຮັບຜິດຊອບຄວນຈະເປັນແນວໃດ. ໃນຖານະໄອຍະການຂອງລັດຖະບານກາງ, ຂ້າພະເຈົ້າໄດ້ເອົາຜິດກັບນາຍຈ້າງທີ່ສໍ້ໂກງເງິນຄ່າຈ້າງ, ດໍາເນີນຄະດີກັບອາຊະຍາກໍາທີ່ເກີດຈາກຄວາມກຽດຊັງ, ເອົາຜູ້ກະທໍາຜິດກ່ຽວກັບການຄ້າອາວຸດປືນ ແລະ ຄ້າຢາເຟນຕານິລມາຮັບຜິດ ແລະ ປົກປ້ອງຜູ້ເຄາະຮ້າຍຈາກຄວາມຮຸນແຮງ.

ຄວາມປອດໄພທີ່ແທ້ຈິງມີຄວາມໝາຍຫຼາຍຫຼາຍກວ່າການຈັບກຸມ. ເຊິ່ງໝາຍເຖິງຄວາມຮັບຜິດຊອບດ້ວຍຄວາມເມດຕາ, ການຄຸ້ມຄອງແຮງງານ ແລະ ສິ່ງແວດລ້ອມທີ່ເຂັ້ມແຂງ, ເສລີພາບໃນການຈະເລີນພັນ ແລະ ທາງເລືອກອື່ນທີ່ແທ້ຈິງແທນການຖືກຄຸມຂັງ. ນັ້ນແມ່ນເຫດຜົນວ່າຍ້ອນຫຍັງຂ້າພະເຈົ້າຈຶ່ງສະໜັບສະໜູນສານຊຸມຊົນແຫ່ງໃໝ່ທີ່ສຸມໃສ່ການຟື້ນຟູ ບໍ່ແມ່ນການກັບຄືນມາກະທໍາຜິດແລະຮັບໂທດແບບຊໍ້າແລ້ວຊໍ້າອີກ.

ໃນຊ່ວງເວລາທີ່ສິດທິຂອງພວກເຮົາຖືກຄຸກຄາມໂດຍລັດຖະບານ Trump ພວກເຮົາຕ້ອງການໄອຍະການເມືອງທີ່ມີປະສົບການ, ເປັນແກນຫຼັກ ແລະ ມີຄວາມຮູ້ເພື່ອຕໍ່ສູ້ກັບຄືນ ແລະ ເປັນຜູ້ນໍາຕັ້ງແຕ່ມື້ທໍາອິດ. ຂ້າພະເຈົ້າພ້ອມແລ້ວທີ່ຈະເຮັດວຽກຮັບໃຊ້ທ່ານ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກໍາລັງເຂົ້າຮ່ວມໂຄງການບັດກໍານັນສະໜັບສະໜູນປະຊາທິປະໄຕ.*



**ຊື່ຜູ້ສະໝັກ:** Rory O’Sullivan

**ຊື່ແຄມເປນ:** ໝູ່ຂອງ Rory O’Sullivan

**ເວັບໄຊແຄມເປນ:** www.electrory.com

**ຕຳແໜ່ງຢູ່ໃນເມືອງ:** ໄອຍະການເມືອງ

**ເບີໂທລະສັບແຄມເປນ:** 206-356-9852

Seattle ສົມຄວນມີໄອຍະການເມືອງທີ່ໃຫ້ຄວາມສຳຄັນກັບການເຮັດໃຫ້ເມືອງຂອງພວກເຮົາປອດໄພຍິ່ງຂຶ້ນ. ພວກເຮົາທຸກຄົນຕໍ່ຕ້ານອາຊະຍາກຳ, ແຕ່ການຕໍ່ຕ້ານອາຊະຍາກຳນັ້ນບໍ່ພຽງພໍ. ພວກເຮົາຍັງຄົງລໍຖ້າການແກ້ໄຂ.

ຫ້ອງການໄອຍະການຂອງເມືອງໄດ້ປິດສານຊຸມຊົນ, ຕໍ່ສູ້ກັນກັບຜູ້ພິພາກສາທີ່ຖືກເລືອກຕັ້ງທີ່ອະນຸຍາດໃຫ້ດຳເນີນຄະດີສຳລັບການເມົາແລ້ວຂັບ 85 ມື້ໂດຍບໍ່ໄດ້ເຮັດຫຍັງເລີຍຕໍ່ຄຳສັ່ງຝ່າຍບໍລິຫານຂັດຕໍ່ລັດຖະທຳມະນູນ ແລະ ລົ້ມເຫຼວໃນການສ້າງເມືອງທີ່ປອດໄພ ແລະ ມີຄວາມເມດຕາຄົນອື່ນຫຼາຍຂຶ້ນຕາມທີ່ພວກເຂົາໄດ້ໃຫ້ສັນຍາໄວ້.

ຂ້ອຍໃຊ້ຊີວິດການເຮັດວຽກຂອງຂ້ອຍໃນການຕໍ່ສູ້ເພື່ອຜູ້ອອກແຮງງານ, ການຮັບປະກັນການເຂົ້າເຖິງລະບົບກົດໝາຍທີ່ເທົ່າທຽມ ແລະ ເປັນຜູ້ຮ່ວມມືທີ່ຫ້າວຫັນ. ຂ້ອຍກຽມພ້ອມທີ່ຈະນຳພາຫ້ອງການຂອງໄອຍະການເມືອງທີ່ຊຸກຍູ້ແນວທາງແກ້ໄຂບັນຫາທີ່ Seattle ກຳລັງພົບຢູ່.

ຂ້ອຍຈະນຳເອົາສານປະຊາຄົມຄືນມາພ້ອມກັບລະບົບຕິດຕາມທີ່ປັບປຸງແລ້ວເພື່ອໃຫ້ມີໂອກາດຫຼຸບຫຼີກອອກຈາກວົງຈອນຂອງອາຊະຍາກຳ, ເລັ່ງດຳເນີນຄະດີການກໍ່ຄວາມຮຸນແຮງໃນຄອບຄົວ ແລະ ການຂັບຂີ່ໃນຂະນະມຶນເມົາເພື່ອທີ່ພວກເຮົາຈະບໍ່ໄດ້ລໍຖ້າໃຫ້ເກີດເຫດຊ້ຳ, ບັງຄັບໃຊ້ມາດຕະຖານແຮງງານທີ່ເຂັ້ມແຂງເພື່ອປົກປ້ອງຄົນງານຈາກການປະຕິບັດທີ່ບໍ່ດີໃນບ່ອນເຮັດວຽກ ແລະ ສ້າງຫ້ອງການໄອຍະການເມືອງທີ່ມີຄວາມສາມາດ - ມຸ່ງເນັ້ນໃສ່ການປົກຄອງທີ່ດີ.

ການຮັບຮອງ: ກຳມາທິການການປະກັນໄພ Patty Kuderer, ສະມາຊິກສະພາສູງຂອງລັດ Rebecca Saldaña, ຜູ້ຕາງໜ້າຂອງລັດ Chipalo Street ແລະ Sharon Tomiko Santos, ອະດີດສະມາຊິກສະພານະຄອນ Tammy Morales ແລະ Mike O'Brien, Seattle Dispatchers' Guild ແລະ ອື່ນໆ.

*ຜູ້ສະໝັກຄົນນີ້ກຳລັງເຂົ້າຮ່ວມໂຄງການບັດປະມູນປະຊາທິປະໄຕ.*



**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Nathan Rouse

**ຊື່ແຄມເປນ:** Vote Rouse

**ເວັບໄຊແຄມເປນ:** www.voterouse.com

**ຕຳແໜ່ງໃນເມືອງ:** ໄອຍະການເມືອງ

**ເບີໂທລະສັບແຄມເປນ:** 206-593-2203

ຂ້າພະເຈົ້າຊື່ **Nathan Rouse**ເປັນ **ທະນາຍຄວາມຂອງລັດຖະບານ, ຜູ້ສະໜັບສະໜູນຊ່ວຍເຫຼືອດ້ານກົດໝາຍ ແລະເປັນພໍ່** ກຳລັງລົງສະໝັກຊິງຕຳແໜ່ງ **ໄອຍະການເມືອງຊີແອດເທິລຄົນຕໍ່ໄປ.**
ຂ້າພະເຈົ້າໄດ້ໃຊ້ຊີວິດໃນການປະກອບອາຊີບທະນາຍຄວາມຂອງລັດຖະບານເພື່ອຢືນຍັດປົກປ້ອງຜູ້ກະທຳຜິດທີ່ຜິດຫວັງຈາກລະບົບທີ່ລົ້ມເຫຼວ ແລະຕໍ່ສູ້ເພື່ອຄວາມຍຸຕິທຳ, ຄວາມຮັບຜິດຊອບ ແລະໂອກາດຄັ້ງທີສອງ.

ຂ້າພະເຈົ້າກຳລັງລົງສະໝັກຊິງຕຳແໜ່ງເນື່ອງຈາກຂ້າພະເຈົ້າຫ່ວງໃຍໃນເມືອງນີ້ຢ່າງເລິກເຊິ່ງ ແລະເຊື່ອວ່າພວກເຮົາຕ້ອງການລະບົບຍຸຕິທຳທີ່ໄດ້ຜົນສຳລັບ **ທຸກຄົນ ບໍ່ແມ່ນພຽງແຕ່ຜູ້ມີອຳນາດເທົ່ານັ້ນ.** ພວກເຮົາຈຳເປັນຕ້ອງມີ **ການແກ້ໄຂບັນຫາຄວາມປອດໄພສາທາລະນະທີ່ແທ້ຈິງ** ທີ່ແກ້ໄຂບັນຫາອາຊະຍາກຳລະຫຸໂທດປະເພດຮ້າຍແຮງ ພ້ອມທັງສະເໜີການຟື້ນຟູ ແລະການສະໜັບສະໜູນຢ່າງສົມເຫດສົມຜົນໃຫ້ກັບຜູ້ກະທຳຜິດທີ່ໄດ້ຮັບການປ່ອຍຕົວກັບຄືນສູ່ຊຸມຊົນຂອງພວກເຮົາ. ພວກເຮົາຈຳເປັນຕ້ອງ **ປົກປ້ອງຄົນເຮັດວຽກແລະຜູ້ເຊົ່າ, ສ້າງຕັ້ງກອງທຶນຊົດເຊີຍທີ່ເຂັ້ມແຂງຍິ່ງຂຶ້ນສຳລັບຜູ້ຖືກເຄາະຮ້າຍຈາກອາຊະຍາກຳ** ແລະຢືນຍັດຕໍ່ສູ້ເພື່ອ **ຄ່ານິຍົມທີ່ກ້າວໜ້າຂອງເມືອງຊີແອດເທິລ** ໂດຍສະເພາະຢ່າງຍິ່ງໃນເວລາທີ່ຄ່ານິຍົມເຫຼົ່ານີ້ຖືກໂຈມຕີຈາກກລັດຖະບານທຣັມ. ພວກເຮົາບໍ່ສາມາດເພິ່ງພາໄອຍະການເມືອງຂອງພວກເຮົາທີ່ສັງກັດພັກຣີພັບລີກັນໃຫ້ມາຄອຍຖ້າສະໜັບສະໜູນພວກເຮົາໄດ້.

ທຸກໆມື້ຂ້າພະເຈົ້າເຫັນດ້ວຍຕົນເອງວ່າແນວທາງຂອງພວກເຮົາໃນການດຳເນີນກະບວນການຍຸຕິທຳໃນປັດຈຸບັນແມ່ນບໍ່ໄດ້ຜົນ. ຫຼາຍຄັ້ງເກີນໄປທີ່ພວກເຮົາປ່ອຍໃຫ້ຜູ້ກະທຳຜິດຜ່ານລະບົບໄປໂດຍບໍ່ໄດ້ແກ້ໄຂສາເຫດຫຼັກຂອງອາດຊະຍາກຳ ຫຼືກະກຽມໃຫ້ເຂົາເຈົ້າພ້ອມໃນການປະສົບຜົນສຳເລັດເມື່ອເຂົາເຈົ້າອອກຈາກຄຸກໄປເພື່ອບໍ່ໃຫ້ເຂົາເຈົ້າກະທຳຜິດຊ້ຳ. ຂ້າພະເຈົ້າຈະເນັ້ນໃສ່ **ນະໂຍບາຍທີ່ຂັບເຄື່ອນດ້ວຍຂໍ້ມູນ** ເຊິ່ງຈະຊ່ວຍປັບປຸງຄວາມປອດໄພສາທາລະນະໄດ້ຈິງໃນຂະນະທີ່ຍັງຄົງຮັບປະກັນຄວາມຮັບຜິດຊອບຢ່າງສົມເຫດສົມຜົນ.

ຂ້າພະເຈົ້າກຳລັງລົງສະໝັກຊິງຕຳແໜ່ງເພື່ອສ້າງ **ເມືອງຊີແອດເທິລໃຫ້ປອດໄພ ແລະຍຸຕິທຳຫຼາຍຂຶ້ນ** ແລະຂ້າພະເຈົ້າຫວັງວ່າທ່ານຈະເຂົ້າຮ່ວມກັບຂ້າພະເຈົ້າ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກຳລັງເຂົ້າຮ່ວມໂຄງການບັດກຳນັນສະໜັບສະໜູນປະຊາທິປະໄຕ.*



**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Eddie Lin

**ຊື່ແຄມເປນ:** Eddie for Seattle

**ເວັບໄຊຂອງແຄມເປນ:** [https://www.linforseattle.com/](https://www.linforseattle.com/)

**ຕໍາແໜ່ງໃນເມືອງ:** ສະມາຊິກສະພາເທດສະບານເມືອງ ເຂດ 2

**ເບີໂທລະສັບແຄມເປນ:** 206-734-7412

ໃນຖານະຜູ້ຊ່ວຍໄອຍະການເມືອງປະຈໍາຫ້ອງການການເຄຫະ Eddie ໄດ້ເຮັດວຽກເປັນເວລາຫຼາຍປີເພື່ອຊ່ວຍລະດົມທຶນສໍາລັບທີ່ຢູ່ອາໄສໃນລາຄາພໍຈ່າຍໄດ້ຈໍານວນຫຼາຍພັນຢູນິດ. ລາວເຊື່ອວ່າຄວນຈະໃຫ້ຄວາມສໍາຄັນໃນການຫຼຸດຜ່ອນຄ່າເຊົ່າທີ່ເພີ່ມຂຶ້ນສູງເປັນອັນດັບທໍາອິດ. Eddie ຈະເຮັດວຽກຢ່າງບໍ່ອິດເມື່ອຍເພື່ອແກ້ໄຂບັນຫາການແບ່ງເຂດພື້ນທີ່ທີ່ມີມາດົນນານ, ການເລືອກປະຕິບັດດ້ານການເຄຫະ ແລະ ການຂາດການລົງທຶນທີ່ເປັນລະບົບ ເຊິ່ງເປັນພາລາແກ່ເມືອງຂອງພວກເຮົາເປັນເວລາຫຼາຍສິບປີ ໂດຍສະເພາະພື້ນທີ່ທາງປາຍທິດໃຕ້ຂອງເມືອງ.

Eddie ເປັນລູກຊາຍຂອງຜູ້ອົບພະຍົບຊາວໄຕ້ຫວັນ ແລະ ຕ້ອງປະເຊີນກັບການເລືອກປະຕິບັດເມື່ອລາວເຕີບໃຫຍ່ຢູ່ໃນລັດ North Carolina. ລາວໄດ້ເພິ່ງພາທຶນການສຶກສາ, ຄວາມຊ່ວຍເຫຼືອທາງການເງິນ ແລະ ເຮັດວຽກຫຼາຍບ່ອນເພື່ອຊ່ວຍຈ່າຍຄ່າເລົ່າຮຽນໃນມະຫາວິທະຍາໄລ. ລາວເປັນຊ່າງທາສີເຮືອນ, ເປັນຄົນທໍາຄວາມສະອາດໃນໂບດແຫ່ງໜຶ່ງໃນພື້ນທີ່ ແລະ ເປັນຄົນສົ່ງຂ່າວສານໂດຍໃຊ້ລົດຖີບ. ດັ່ງທີ່ໜັງສືພິມ The Stranger ໄດ້ຕີພິມວ່າ: "ວິກິດການດ້ານຄວາມສາມາດໃນການຈັບຈ່າຍຂອງເມືອງຊີແອດເທິລບໍ່ແມ່ນເລື່ອງໃໝ່ສໍາລັບ Eddie ເຊິ່ງລາວເຄີຍປະສົບມາແລ້ວ."

Eddie ລົງສະໝັກຮັບເລືອກຕັ້ງເພາະວ່າລາວມີຄວາມອຸກອັ່ງໃຈຍ້ອນການຂາດຄວາມຮີບດ່ວນໃນການແກ້ໄຂສິ່ງທ້າທາຍທີ່ຍາກທີ່ສຸດຂອງເມືອງ Seattle. ບໍ່ວ່າຈະເປັນຄວາມປອດໄພຂອງສາທາລະນະ, ຄວາມສາມາດໃນການຈັບຈ່າຍ, ການບໍ່ມີທີ່ຢູ່ອາໄສ ຫຼື ໂຮງຮຽນຂອງລັດທີ່ມີກໍາລັງປະສົບບັນຫາ ລາວພ້ອມທີ່ຈະກ້າວຂຶ້ນມາ ແລະ ສ້າງຄວາມກ້າວໜ້າຢ່າງເປັນຮູບປະທໍາ.

Eddie ເຊື່ອວ່າເມືອງ Seattle ຄວນຈະເປັນສະຖານທີ່ສໍາລັບທຸກຄົນ ແລະ ນັ້ນແມ່ນເຫດຜົນທີ່ລາວສະໜັບສະໜູນການເກັບພາສີກັບບໍລິສັດທີ່ຮັ່ງມີແລະຄົນທີ່ຮັ່ງມີຫຼາຍເພື່ອສະຫນອງທຶນໃຫ້ແກ່ການບໍລິການທີ່ຈໍາເປັນທີ່ພວກເຮົາເພິ່ງພາອາໄສ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກໍາລັງເຂົ້າຮ່ວມໂຄງການບັດກໍານັນສະໜັບສະໜູນປະຊາທິປະໄຕ.*



**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Adonis Ducksworth

**ຊື່ແຄມເປນ:** Adonis for Seattle

**ເວັບໄຊແຄມເປນ:** [AdonisForSeattle.com](AdonisForSeattle.com)

**ຕຳແໜ່ງໃນເມືອງ:** ສະມາຊິກສະພາເທດສະບານເມືອງ ເຂດ 2

**ເບີໂທລະສັບແຄມເປນ:** 206-495-5597

ຂ້າພະເຈົ້າເຕີບໃຫຍ່ຂຶ້ນມາໂດຍການລ້ຽງດູຈາກແມ່ຄົນດຽວຢູ່ໃນເຮືອນເຊົ່າປະເພດຮອມສາມຄອບຄົວໃນລະແວກ Beacon Hill. ຂ້າພະເຈົ້າມີຄວາມຊົງຈຳທີ່ສຸກໃຈໃນການຫຼິ້ນກັບໝູ່ເພື່ອນທີ່ຢູ່ລະແວກໃກ້ຄຽງ. ທີ່ຢູ່ອາໄສລາຄາບໍ່ແພງຢູ່ໃກ້ໂຮງຮຽນແລະບໍລິການຕ່າງໆເປັນສິ່ງສຳຄັນຕໍ່ຄວາມໝັ້ນຄົງຂອງພວກເຮົາ.

ທຸກມື້ນີ້ປະຊາຊົນມີຄວາມກັງວົນກ່ຽວກັບຄວາມຮຸນແຮງຈາກອາວຸດປືນ, ການບໍ່ສາມາດຊື້ເຮືອນຢູ່ໄດ້, ຄ່າໃຊ້ຈ່າຍທີ່ສູງຂຶ້ນຈົນບໍ່ສາມາດຈ່າຍຄ່າເຮືອນທີ່ຕ້ອງການຢູ່ອາໄສໄດ້ ແລະການຂາດໂອກາດຕ່າງໆທີ່ເດັກນ້ອຍຈະໄດ້ຮັບ.

ໃນຊ່ວງ 10 ປີທີ່ຜ່ານມາຂ້າພະເຈົ້າໄດ້ເຮັດວຽກເປັນຜູ້ຊ່ຽວຊານດ້ານການເຂົ້າເຖິງ, ການມີສ່ວນພົວພັນແລະນະໂຍບາຍຢູ່ທີ່ເມືອງ Seattle. ຂ້າພະເຈົ້າມີປະຫວັດການເຮັດວຽກດ້ານການນຳຄົນມາເຕົ້າໂຮມກັນເພື່ອເຮັດສິ່ງຕ່າງໆໃຫ້ສຳເລັດ.

ຂ້າພະເຈົ້າກຳລັງລົງສະໝັກຮັບເລືອກຕັ້ງເພາະວ່າຂ້າພະເຈົ້າຮູ້ວ່າພວກເຮົາສາມາດເຮັດໃຫ້ຊຸມຊົນຂອງພວກເຮົາດີຂຶ້ນໄດ້.

ດ້ວຍການລົງຄະແນນສຽງຂອງທ່ານ ຂ້າພະເຈົ້າຈະມອບຜົນໄດ້ຮັບທີ່ພວກເຮົາສົມຄວນໄດ້ຮັບດັ່ງຕໍ່ໄປນີ້

- ທາງເລືອກທີ່ຢູ່ອາໄສທີ່ດີກວ່າສຳລັບຜູ້ທີ່ຕ້ອງການທີ່ຈະດຳລົງຊີວິດຢູ່ໃນພື້ນທີ່ທາງເບື້ອງໃຕ້ຂອງເມືອງ; ທາງເລືອກເພີ່ມເຕີມສຳລັບຜູ້ທີ່ຕ້ອງການທີ່ຈະອາໄສຢູ່ໃນເຮືອນແລະລະແວກໃກ້ຄຽງຂອງເຂົາເຈົ້າຕໍ່ໄປ.
- ເຈົ້າໜ້າທີ່ຕຳຫຼວດທີ່ມີຄວາມຮັບຜິດຊອບຫຼາຍຂຶ້ນ, ການເພີ່ມຈຳນວນຜູ້ຕອບສະໜອງຕໍ່ກັບເຫດການຂອງ CARE Team ແລະ ການລົງທຶນໃນການເຂົ້າຊ່ວຍເຫຼືອເພື່ອຫຼຸດຜ່ອນຄວາມຮຸນແຮງຈາກການໃຊ້ອາວຸດປືນແລະປົກປ້ອງເດັກນ້ອຍ ແລະທຸລະກິດຂະໜາດນ້ອຍ.
- ການດຳເນີນການຕໍ່ເນື່ອງຈາກຄວາມສຳເລັດຂອງການເກັບພາສີການຂົນສົ່ງ, ຂ້າພະເຈົ້າຈະເຮັດວຽກເພື່ອເຮັດໃຫ້ລົດຂັບຂີ່ຊ້າລົງທີ່ຖະໜົນ Rainier ແລະ MLK, ເຮັດໃຫ້ການຂົນສົ່ງສາທາລະນະປອດໄພ ແລະເຊື່ອຖືໄດ້ ແລະໃຫ້ຜູ້ໃຊ້ທຸກຄົນມີທາງເລືອກທີ່ປອດໄພກວ່າ, ລາດເດົາໄດ້ຫຼາຍຂຶ້ນ ແລະມີປະສິດທິພາບ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກຳລັງເຂົ້າຮ່ວມໂຄງການບັດກຳນັນສະໜັບສະໜູນປະຊາທິປະໄຕ.*



ຊື່ຜູ້ສະໝັກຮັບເລືອກຕັ້ງ: Jeanie Chunn

ຊື່ແຄມເປນ: Vote for Jeanie

ເວັບໄຊແຄມເປນ: votejeanie.com

ຕໍາແໜ່ງໃນເມືອງ: ສະມາຊິກສະພາເທດສະບານເມືອງ ຕໍາແໜ່ງທີ 2

ເບີໂທລະສັບແຄມເປນ: 206-255-4562

ໃນຊ່ວງເວລາທີ່ສໍາຄັນນີ້ ເມືອງ Seattle ຕ້ອງການສະມາຊິກສະພາເທດສະບານເມືອງທີ່ຮັບຟັງຢ່າງແທ້ຈິງ— ເຊິ່ງມີຮາກຖານໃນຊຸມຊົນ, ບໍ່ຫວັ່ນໄຫວກັບຜົນປະໂຫຍດພິເສດ ແລະ ພ້ອມທີ່ຈະຕໍ່ສູ້ເພື່ອການປ່ຽນແປງທີ່ກ້າຫານ ແລະ ກ້າວໜ້າ. ຂ້າພະເຈົ້າກໍາລັງລົງສະໝັກຮັບເລືອກຕັ້ງເພື່ອເປັນປາກເປັນສຽງນັ້ນ.

ເມືອງຂອງພວກເຮົາປະເຊີນກັບສິ່ງທ້າທາຍທີ່ຮ້າຍແຮງ: ໂຄງສ້າງພາສີອັດຕາຖົດຖອຍທີ່ສ້າງຜົນປະໂຫຍດໃຫ້ແກ່ຄົນຮັ່ງມີ, ສໍານັກງານຕໍາຫຼວດທີ່ຂາດຄວາມຮັບຜິດຊອບ ແລະ ການບໍລິຫານຈັດການທີ່ເຮັດຄວາມຍາກຈົນເປັນສິ່ງທີ່ຜິດກົດໝາຍອາຍາ ແທນທີ່ຈະແກ້ໄຂບັນຫາທີ່ສາເຫດຫຼັກ. ພວກເຮົາຕ້ອງການຄວາມເປັນຜູ້ນໍາທີ່ບໍ່ພຽງແຕ່ເວົ້າເຖິງຄ່ານິຍົມ, ແຕ່ໃຊ້ຊີວິດຕາມຄ່ານິຍົມນັ້ນເຊັ່ນກັນ.

ໃນຖານະທີ່ເປັນຜູ້ສະໜັບສະໜູນມາດົນນານ, ຂ້າພະເຈົ້າໄດ້ຊ່ວຍໃຫ້ມີການຜ່ານນະໂຍບາຍທີ່ສ້າງການປ່ຽນແປງຕ່າງໆ, ເຊັ່ນ: JumpStart Seattle, ການອອກກົດໝາຍ Pay Up, ການກໍານົດເພດານຄ່າທໍານຽມການຈັດສົ່ງ, ໃບອະນຸຍາດຂາຍອາຫານກາງແຈ້ງຟຣີ ແລະ ຈັດຫາເງິນທຶນບັນເທົາທຸກຂອງລັດຖະບານກາງຈໍານວນ 28.6 ຕື້ໂດລາສໍາລັບຮ້ານອາຫານອິດສະຫຼະທົ່ວປະເທດ. ຂ້າພະເຈົ້າຮູ້ວິທີເຮັດໃນການເຮັດສິ່ງຕ່າງໆໃຫ້ສໍາເລັດ ແລະ ພ້ອມທີ່ຈະເຮັດສິ່ງນີ້ເພື່ອເມືອງຂອງພວກເຮົາທຸກໆມື້.

ຂ້າພະເຈົ້າມຸ່ງໝັ້ນທີ່ຈະເຮັດໃຫ້ທີ່ຢູ່ອາໄສມີລາຄາບໍ່ແພງ ເຊິ່ງມຸ່ງເນັ້ນປະຊາຊົນຫຼາຍກວ່າຜົນກໍາໄລ, ຄວາມປອດໄພສາທາລະນະທີ່ມີຮາກຖານຢູ່ໃນແນວທາງການແກ້ໄຂບັນຫາທີ່ຊຸມຊົນເປັນຜູ້ນໍາ ແລະ ເສດຖະກິດທ້ອງຖິ່ນທີ່ຈະເລີນຮຸ່ງເຮືອງ ເຊິ່ງທຸລະກິດຂະໜາດນ້ອຍ ແລະ ຄົນເຮັດວຽກຈະສາມາດຈະເລີນເຕີບໂຕໄດ້.

ມາຮ່ວມກັນສ້າງເມືອງທີ່ມີລາຄາບໍ່ແພງ, ມີຄວາມຮັບຜິດຊອບ ແລະ ເປັນມິດກັບທຸກຄົນ. ມາຊ່ວຍກັນປ່ຽນອໍານາດຈາກຜົນປະໂຫຍດຂອງບໍລິສັດ ແລະ ໄປສູ່ປະຊາຊົນຜູ້ທີ່ເຮັດໃຫ້ Seattle ເປັນບ້ານກັນດີກວ່າ. ຂ້າພະເຈົ້າຂໍຄະແນນສຽງຈາກທ່ານເພື່ອຊ່ວຍສ້າງເມືອງທີ່ທຸກຄົນມີຄວາມສໍາຄັນ ແລະ ຈະເລີນຮຸ່ງເຮືອງ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກໍາລັງເຂົ້າຮ່ວມໂຄງການບັດກໍານັບສະໜັບສະໜູນປະຊາທິປະໄຕ.*



ຊື່ຜູ້ສະໝັກຮັບເລືອກຕັ້ງ: Jamie Fackler

ຊື່ແຄມເປນ: Jamie for Seattle

ເວັບໄຊແຄມເປນ: jamieforseattle.com

ຕໍາແໜ່ງໃນເມືອງ: ສະມາຊິກສະພາເທດສະບານເມືອງ

ຕໍາແໜ່ງທີ 2

ເບີໂທລະສັບແຄມເປນ: 206-963-3211

Seattle ເປັນເມືອງໜຶ່ງທີ່ຮັ່ງມີທີ່ສຸດໃນໂລກ ແຕ່ກັບບໍ່ຮູ້ສຶກວ່າເປັນແບບນັ້ນ. ພວກເຮົາມີມະຫາເສດຖີລະດັບພັນລ້ານທີ່ຫຼົບຫຼີກພາສີ ໃນຂະນະທີ່ຫຼາຍຄອບຄົວຂາດສິ່ງຈໍາເປັນພື້ນຖານ. ນີ້ບໍ່ແມ່ນວິກິດການດ້ານຊັບພະຍາກອນ ແຕ່ມັນເປັນວິກິດການດ້ານການຈັດລໍາດັບຄວາມສໍາຄັນ.

ຄອບຄົວຄົນເຮັດວຽກເຄີຍຊື້ເຮືອນຢູ່ທີ່ນີ້ ແລະ ຈະເລີນຮຸ່ງເຮືອງ. ພວກເຮົາບໍ່ຈໍາເປັນຕ້ອງຍອມຮັບສະຖານະພາບໃໝ່ນີ້. ຂ້າພະເຈົ້າກໍາລັງລົງສະໝັກຮັບເລືອກຕັ້ງເພື່ອສ້າງເມືອງ Seattle ບ່ອນທີ່ທຸກຄົນມີເຮືອນຢູ່, ເດັກນ້ອຍທຸກຄົນຮູ້ສຶກປອດໄພໃນການຍ່າງໄປໂຮງຮຽນ ແລະ ບ່ອນທີ່ຊຸມຊົນຂອງພວກເຮົາເຕັມໄປດ້ວຍຄວາມຫວັງ.

ຂ້າພະເຈົ້າສະໜັບສະໜູນທີ່ຢູ່ອາໄສສັງຄົມ ເພື່ອຈັດຫາທີ່ຢູ່ອາໄສທີ່ມີຄຸນນະພາບສູງ, ເຮືອນທີ່ກໍ່ສ້າງໂດຍສະຫະພາບແຮງງານເພື່ອເປັນສິນຄ້າສາທາລະນະ. ຂ້າພະເຈົ້າຈະຂະຫຍາຍໂອກາດໃນການມີທີ່ຢູ່ອາໄສຖາວອນໃນລາຄາບໍ່ແພງ, ປົກປ້ອງສິດຂອງຜູ້ເຊົ່າ ແລະ ສ້າງຄວາມສາມາດໃນການຮັບຮອງທີ່ພັກອາໄສ. ຫ້ອງການຂອງຂ້າພະເຈົ້າຈະຂະຫຍາຍທີມງານດູແລ ແລະ ສະໜັບສະໜູນອົງກອນທີ່ເຮັດວຽກເພື່ອແກ້ໄຂວິກິດການດ້ານຢາເສບຕິດ ແລະ ສຸຂະພາບຈິດຂອງພວກເຮົາ. ພວກເຮົາຈະປະຕິເສດທີ່ຈະຮັບເອົາສັນຍາກັບສໍານັກງານຕໍາຫຼວດທີ່ບໍ່ມີມາດຕະການດ້ານຄວາມຮັບຜິດຊອບ, ສະໜັບສະໜູນເງິນທຶນສໍາລັບໂຄງການປັບປຸງພຶດຕິກໍາ ແລະ ຟື້ນຟູຄວາມຮູ້ສຶກຄວາມປອດໄພໃນເມືອງຂອງພວກເຮົາ. ຂ້າພະເຈົ້າບໍ່ແມ່ນນັກການເມືອງລະດັບມືອາຊີບ ແຕ່ເມືອງຂອງພວກເຮົາຄວນຈະມີຄົນເຮັດວຽກປະຈໍາຢູ່ສາລາກາງ.

ການຮັບຮອງ: King County Democrats, 37th District Democrats, County Councilmember Teresa Mosqueda, Tammy Morales, Larry Gossett, MLK Labor, PROTEC17, ILWU19, ATU587, SUP, IAM751, AFT Washington, UAW4121. ຂ້າພະເຈົ້າຈະຮູ້ສຶກເປັນກຽດຖ້າທ່ານຈະສະໜັບສະໜູນຂ້າພະເຈົ້າເຊັ່ນກັນ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກໍາລັງເຂົ້າຮ່ວມໂຄງການບັດກໍານັນສະໜັບສະໜູນປະຊາທິປະໄຕ.*



ຊື່ຜູ້ສະໝັກຮັບເລືອກຕັ້ງ: Jesse A. James

ຊື່ແຄມເປນ: Jesse A. James for Seattle

ເວັບໄຊແຄມເປນ: jesseajames.com

ຕໍາແໜ່ງໃນເມືອງ: ສະມາຊິກສະພາເທດສະບານເມືອງ ຕໍາແໜ່ງທີ່ 8

ເບີໂທລະສັບແຄມເປນ: (206) 657-7062

ໃນຖານະທີ່ເປັນນັກດົນຕີ/ນັກຂຽນລຸ່ນມິເລນນຽລທີ່ມີຄວາມຮູ້ຄວາມເຂົ້າໃຈໂດຍກົງເຖິງຄວາມຍາກລໍາບາກໃນການເຮັດວຽກ ແລະ ການເຊົ່າທີ່ຢູ່ອາໄສໃນເມືອງຊີແອດເທິລ,
ສິ່ງສໍາຄັນທີ່ສຸດຂອງຂ້າພະເຈົ້າໃນຖານະສະມາຊິກສະພາເທດສະບານເມືອງແມ່ນການເຮັດໃຫ້ເມືອງຊີແອດເທິລມີຄວາມປອດໄພ ແລະ ລາຄາບໍ່ແພງສໍາລັບທຸກຄົນ.

ໃນປີ 2022 ຂ້າພະເຈົ້າໄດ້ລົງສະໝັກຊິງຕໍາແໜ່ງສະມາຊິກລັດຖະສະພາ ພາຍໃຕ້ນະໂຍບາຍທີ່ເນັ້ນໃສ່ການປະຕິຮູບພາສີ ແລະ ການປົກປ້ອງສິດທິໃນການຈະເລີນພັນ. ຂ້າພະເຈົ້າໄດ້ເຂົ້າຮ່ວມກັບພັກ Cascade Party ໃໝ່ໃນປີ 2024 ແລະໄດ້ຮັບເລືອກໃຫ້ເຂົ້າຮ່ວມໃນຄະນະກໍາມະການຫຼັງຈາກການຊຸກຍູ້ການເພີ່ມສິດທິເສລີພາບໃນການປາກເວົ້າ ແລະ ລະບົບປະກັນສຸຂະພາບແບບທົ່ວໜ້າໃຫ້ກັບແພດພອນຂອງເຂົາເຈົ້າສໍາເລັດ.

ຂ້າພະເຈົ້າເຊື່ອວ່າອຸດົມການຄວນມີຄວາມສໍາຄັນຮອງລົງມາຈາກການປະຕິບັດຈິງ ແລະ ຊຸມຊົນໃນເລື່ອງທີ່ກ່ຽວກັບລັດຖະບານທ້ອງຖິ່ນ. ນີ້ແມ່ນບ່ອນທີ່ການປ່ຽນແປງທີ່ແທ້ຈິງເກີດຂຶ້ນ.

ນະໂຍບາຍຂອງລັດຖະບານກາງແມ່ນມີຄວາມວຸ່ນວາຍ ແລະ
ພວກເຮົາຕ້ອງການລັດຖະບານທ້ອງຖິ່ນທີ່ມີສະຖຽນລະພາບ.  ໃນໄລຍະສອງສາມປີທີ່ຜ່ານມາ
ເມືອງຊີແອດເທິລໄດ້ມີຄວາມຄືບໜ້າດ້ວຍຄວາມປອດໄພຂອງສາທາລະນະ ແລະ ທີ່ຢູ່ອາໄສ,
ໃນຂະນະດຽວກັນກໍເຮັດໃຫ້ເມືອງຂອງພວກເຮົາໃຫ້ມີຄວາມດຶງດູດໃຈໃນການປະກອບທຸລະກິດ.
ພວກເຮົາສາມາດຊອກຫາຈຸດທີ່ເໝາະສົມໄດ້ໂດຍການຈັດໃຫ້ມີໂຄງການທາງສັງຄົມທີ່ມີຄວາມເຫັນອົກເຫັນໃຈ,
ໃນຂະນະທີ່ສະໜັບສະໜູນເຈົ້າຂອງທຸລະກິດຂະໜາດນ້ອຍເຊັ່ນກັນ.

ຂ້າພະເຈົ້າຂໍສະໜັບສະໜູນການຂະຫຍາຍງານລະບົບຂົນສົ່ງທາງລົດໄຟລາງເບົາຢ່າງຕໍ່ເນື່ອງ. ຂ້າພະເຈົ້າເປັນຜູ້ສະໜັບສະໜູນການຍົກເລີກພາສີນໍ້າຕານ. ນະໂຍບາຍເຫຼົ່ານີ້ສອດຄ່ອງກັບເປົ້າໝາຍຂອງຂ້າພະເຈົ້າເຊິ່ງແມ່ນການເຮັດໃຫ້ເກີດຄວາມຮັບຜິດຊອບ ແລະ ນໍາຄວາມສົມດຸນມາສູ່ສະພາເທດສະບານເມືອງ ແລະ ຂ້າພະເຈົ້າຢູ່ທີ່ນີ້ເພື່ອເຮັດວຽກ!

ຮັບຮອງໂດຍ Krist Novoselic ແລະ ອື່ນໆອີກ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ບໍ່ໄດ້ເຂົ້າຮ່ວມໃນໂຄງການບັດກຳນັນສະໜັບສະໜູນປະຊາທິປະໄຕ.*



ຊື່ຜູ້ສະໝັກຮັບເລືອກຕັ້ງ: Rachael Savage

ຊື່ແຄມເປນ: Friends of Rachael Savage – City Council

ເວັບໄຊແຄມເປນ: http://www.savageforseattle.com

ຕໍາແໜ່ງໃນເມືອງ: ສະມາຊິກສະພາເທດສະບານເມືອງ ຕໍາແໜ່ງທີ່ 8

ເບີໂທລະສັບແຄມເປນ: (206) 657-7062

ໃນຖານະເຈົ້າຂອງທຸລະກິດໃນເມືອງຊີແອດເທິລ
ຂ້າພະເຈົ້າຕ້ອງປະເຊີນຊະຕາກໍາທີ່ເກີດຈາກນັກການເມືອງເຂົ້າມາທໍາລາຍລະບົບການຍຸຕິທໍາທາງອາຍາ,
ປ່ອຍໃຫ້ເກີດການກໍ່ອາຊະຍາກໍາ, ການຕິດຢາເສບຕິດ ແລະ ຄວາມເຈັບປ່ວຍທາງຈິດ ເປັນສາເຫດຂອງການເສຍຊີວິດ
ເຊິ່ງທໍາລາຍທຸລະກິດຂອງພວກເຮົາແລະຕົວເມືອງທີ່ສວຍງາມ ແລະ
ຄວາມຮູ້ສຶກຂອງຄວາມປອດໄພຂອງພົນລະເມືອງທຸກຄົນ. ໃນຖານະທີ່ເປັນຊາວເມືອງ
ຂ້າພະເຈົ້າຕ້ອງປະເຊີນກັບຄ່າເຊົ່າທີ່ເພີ່ມສູງຂຶ້ນເລື້ອຍໆ ແລະ
ເຄີຍປະສົບກັບບັນຫາລາຄາເຮືອນສູງຈົນບໍ່ສາມາດຈັບຕ້ອງໄດ້.
ໃນຖານະສະມາຊິກສະພາເທດສະບານເມືອງທີ່ເປັນຕົວແທນຂອງທ່ານ
ພາລະກິດຂອງຂ້າພະເຈົ້າແມ່ນເພື່ອຮັບໃຊ້ທ່ານໂດຍຜ່ານນະໂຍບາຍການປະຕິບັດທີ່ຈະປິດຊ່ອງຫວ່າງລະຫວ່າງຄ່າຈ້າງທຽ
ບກັບຄ່າເຊົ່າ, ຟື້ນຟູສໍານັກງານຕໍາຫຼວດຂອງພວກເຮົາ, ສ້າງຄ້າຍດັດສ້າງໃນເມືອງຂອງພວກເຮົາເອງ,
ອະນຸຍາດໃຫ້ຈັບກຸມແລະຕັດສິນໂທດຈໍາຄຸກ ແລະ
ສ້າງສູນທີ່ຢູ່ອາໄສເພື່ອການປິ່ນປົວໄລຍະຍາວເພື່ອແກ້ໄຂບັນຫາການລະບາດຂອງຢາເສບຕິດ ແລະ ພະຍາດທາງຈິດ.

ພວກເຮົາສາມາດເຮັດໄດ້ດີກວ່ານີ້. ພົນລະເມືອງທຸກຄົນລ້ວນແຕ່ມີຄວາມປາຖະໜາອັນດຽວກັນ, ຄືໄດ້ຮັບການ
ໄດ້ຮັບການປະຕິບັດຢ່າງຍຸຕິທໍາພາຍໃຕ້ກົດໝາຍ ແລະ ດໍາລົງຊີວິດຢູ່ໃນສັງຄົມທີ່ມີສັນຕິ, ສະຖຽນລະພາບ ແລະ
ຄວາມຈະເລີນຮຸ່ງເຮືອງ. ຄວາມປອດໄພຈະນໍາພາທຸລະກິດ ແລະ
ຄວາມຈະເລີນຮຸ່ງເຮືອງກັບຄືນມາສູ່ເມືອງຂອງພວກເຮົາ. ພວກເຮົາສາມາດເຮັດສິ່ງນີ້ໄດ້ຮ່ວມກັນໄດ້. ດ້ວຍການລົງຄະ
ແນນສຽງຂອງທ່ານ, ຂ້າພະເຈົ້າຈະເປັນຕົວແທນໃຫ້ແກ່ສຽງທີ່ບໍ່ໄດ້ຮັບການຮັບຟັງ, ສຽງແຫ່ງສາມັນສໍານຶກ, ສຽງທີ່ເປັນ
ເອກະພາບ, ໃນການຕໍ່ຕ້ານກັບສະຖານະພາບເກົ່າທີ່ເຮັດໃຫ້ພວກເຮົາຜິດຫວັງເປັນເວລາດົນເກີນໄປ.
ບັດກໍານັນສະໜັບສະໜູນຊາທິປະໄຕຊ່ອຍລະດົມທຶນໃຫ້ກັບຄົນພາຍນອກ.
ກະລຸນາສະໜັບສະໜູນແຄມເປນຫາສຽງຂອງຂ້າພະເຈົ້າດ້ວຍບັດກໍານັນສະໜັບສະໜູນຊາທິປະໄຕຂອງທ່ານໃນມື້ນີ້.

ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກໍາລັງເຂົ້າຮ່ວມໂຄງການບັດກໍານັນສະໜັບສະໜູນປະຊາທິປະໄຕ.



ຊື່ຜູ້ສະໝັກຮັບເລືອກຕັ້ງ: Ray A. Rogers

ຊື່ແຄມເປນ: Ray A. Rogers (ໃນສະພາເທດສະບານເມືອງSeattle, ຕໍາແໜ່ງທີ 8)

ເວັບໄຊແຄມເປນ: [www.RayRogersForSeattle.com](http://www.RayRogersForSeattle.com)

ຕໍາແໜ່ງ: 8

ເບີໂທລະສັບແຄມເປນ: 206-641-0859

ຂ້າພະເຈົ້າຮູ້ວ່າຈະເກີດຫຍັງຂຶ້ນເມື່ອລັດຖະບານລົ້ມເຫຼວ ຍ້ອນວ່າຂ້າພະເຈົ້າເຄີຍໄດ້ຮັບປະສົບການຊີວິດແບບນັ້ນມາແລ້ວ. ຂ້າພະເຈົ້າໄດ້ເຕີບໃຫຍ່ຂຶ້ນໃນພື້ນທີ່ຕາເວັນອອກສຽງໃຕ້ຂອງເມືອງ Seattle ເຊິ່ງໃນເວລານັ້ນມີເດັກນ້ອຍຈໍານວນຫຼາຍຄົນ, ລວມທັງຂ້າພະເຈົ້າ ຖືກດຶງດູດເຂົ້າໄປສູ່ຄວາມຮຸນແຮງ ແລະ ສິ່ງເສບຕິດ. ຂ້າພະເຈົ້າໄດ້ໃຊ້ເວລາຫຼາຍປີໃນການຕໍ່ສູ້ກັບການບໍ່ມີເຮືອນຢູ່, ການຕິດຢາເສບຕິດ ແລະ ການຈໍາຄຸກ. ຊີວິດຂອງຂ້າພະເຈົ້າອາດຈະສິ້ນສຸດລົງຢູ່ທີ່ນັ້ນ. ແຕ່ກໍບໍ່ແມ່ນເຊັ່ນນັ້ນ, ເພາະວ່າຜູ້ນໍາຊຸມຊົນໄດ້ໃຊ້ເວລາໃນການໃຫ້ຄວາມເຊື່ອໝັ້ນໃນຕົວຂ້າພະເຈົ້າ ໃນເວລາທີ່ບໍ່ມີບຸຄົນໃດເຮັດໄດ້. ຂ້າພະເຈົ້າຫັນປ່ຽນຊີວິດຂອງຕົນເອງໃຫ້ເປັນຄົນໃໝ່. ແລະ ສໍາລັບ 20 ປີທີ່ຜ່ານມາ, ຂ້າພະເຈົ້າໄດ້ເຮັດວຽກເພື່ອຊ່ວຍຄົນອື່ນໃຫ້ເຮັດເຊັ່ນດຽວກັນ.

ດຽວນີ້ຂ້າພະເຈົ້າກໍາລັງສະໝັກຊິງຕໍາແໜ່ງໃນສະພາເມືອງ Seattle ເພາະວ່າເມືອງຂອງພວກເຮົາຕົກຢູ່ໃນອັນຕະລາຍ. ຂ້າພະເຈົ້າມີປະສົບການທີ່ແທ້ຈິງໃນການຕໍ່ສູ້ກັບອາຊະຍາກໍາ ແລະ ການຕິດຢາ. ຂ້າພະເຈົ້າກໍ່ຕັ້ງໂຄງການ Circle of Love Outreach ເຊິ່ງເປັນໂຄງການຮາກຫຍ້າ ເພື່ອສະໜັບສະໜູນຜູ້ປະສົບບັນຫາການເສບຕິດ, ຄວາມຮຸນແຮງ ແລະ ການບໍ່ມີທີ່ຢູ່ອາໄສ.

ບາງຄົນໃນສະພາຕ້ອງໃຫ້ພວກເຮົາກັບຄືນໄປສູ່ຄວາມຜິດປົກກະຕິ, ການແບ່ງແຍກ ແລະ ການປະຕິເສດຄວາມຈິງທີ່ເຮັດໃຫ້ເກີດຄວາມເສຍຫາຍຫຼວງຫຼາຍ. ຢ່າປ່ອຍໃຫ້ສິ່ງນັ້ນເກີດຂຶ້ນ. ຂ້າພະເຈົ້າຈະເຮັດວຽກເພື່ອຊ່ວຍພາປະຊາຊົນອອກຈາກການອາໄສຢູ່ໃນເຕັນ ແລະ ຈັດຫາທີ່ຢູ່ອາໄສ ດ້ວຍຄວາມເມດຕາ ແລະ ຄວາມຮີບດ່ວນ. ຂ້າພະເຈົ້າຈະລົງທຶນໃນໂຄງການຊາວໜຸ່ມ, ການປ້ອງກັນຄວາມຮຸນແຮງ, ການຊ່ວຍເຫຼືອດ້ານສຸຂະພາບຈິດ ແລະ ໂອກາດທາງເສດຖະກິດທີ່ແທ້ຈິງ—ເພາະວ່າຂ້າພະເຈົ້າໄດ້ເຫັນສິ່ງທີ່ເກີດຂຶ້ນເມື່ອພວກເຮົາບໍ່ດໍາເນີນການ. ແລະ ຂ້າພະເຈົ້າຈະຢືນຍັດເພື່ອທຸລະກິດຂະໜາດນ້ອຍທີ່ເຮັດໃຫ້ຊຸມຊົນຂອງພວກເຮົາມີຊີວິດຊີວາ.

ຜູ້ສະໝັກຮັບເລືອກຕັ້ງຄົນນີ້ບໍ່ໄດ້ເຂົ້າຮ່ວມໃນໂຄງການບັດກໍານັນສະໜັບສະໜູນປະຊາທິປະໄຕ.



ຜູ້ສະໝັກຮັບເລືອກຕັ້ງ: Alexis Rinck

ຊື່ແຄມເປນ: Alexis for Seattle

ເວັບໄຊແຄມເປນ: www.alexisforseattle.com/

ຕຳແໜ່ງໃນເມືອງ: ສະມາຊິກສະພາເທດສະບານເມືອງ ຕຳແໜ່ງທີ 8

ເບີໂທລະສັບແຄມເປນ: 206-705-9305

ຂ້າພະເຈົ້າພູມໃຈໃນສິ່ງທີ່ຫ້ອງການຂອງຂ້າພະເຈົ້າໄດ້ເຮັດສຳເລັດໃນໄລຍະເວລາສັ້ນໆ:

- ສະໜັບສະໜູນ Prop 1A ເຊິ່ງຜ່ານການໂຫວດດ້ວຍຄະແນນສຽງ 63% ຂອງຄະແນນສຽງໃນປີນີ້, ເພື່ອລະດົມທຶນໃນການກໍ່ສ້າງທີ່ຢູ່ອາໄສທີ່ມີລາຄາບໍ່ແພງ ໂດຍໃຊ້ພາສີຈາກບໍລິສັດຂະໜາດໃຫຍ່.

- ເປັນແກນນຳໃນການຕໍ່ສູ້ເພື່ອປົກປ້ອງເມືອງຂອງພວກເຮົາຈາກການປ່ຽນແປງນະໂຍບາຍຂອງລັດຖະບານກາງ ໂດຍເປັນປະທານຄະນະກຳມະການສະເພາະທີ່ລວບລວມຜູ້ຊ່ຽວຊານ ແລະ ຜູ້ນຳທ້ອງຖິ່ນໃຫ້ມາເຮັດວຽກຮ່ວມກັນ.

- ສະໜັບສະໜູນນະໂຍບາຍພາສີແບບກ້າວໜ້າ, ຫຼຸດຜ່ອນພາລະຂອງທຸລະກິດຂະໜາດນ້ອຍໃນຂະນະດຽວກັນກໍປົກປ້ອງທີ່ຢູ່ອາໄສທີ່ມີລາຄາບໍ່ແພງ, ການເຂົ້າເຖິງອາຫານ ແລະ ການບໍລິການອື່ນໆຈາກການຖືກຕັດງົບປະມານ.

ໃນຖານະເປັນຜູ້ເຊົ່າ, ຜູ້ໂດຍສານລົດປະຈຳທາງ ແລະ ອະດີດພະນັກງານເສີບ, ຂ້າພະເຈົ້າຮູ້ສຶກຕື່ນເຕັ້ນໃນການລົງແຂ່ງຂັນອີກຄັ້ງເພື່ອເຮັດວຽກນີ້ຕໍ່ໄປ. ຂ້າພະເຈົ້າພູມໃຈທີ່ໄດ້ຮັບການຮອງຈາກ MLK Labour, The Stranger, One America votes, The Urbanist, ກຸ່ມ Democratic, Seattle City Councilmember Dan Strauss, ນິຕິບັນຍັດໃນທຸກເຂດນິຕິບັນຍັດ Seattle, ສະມາຊິກ King County Council ທຸກຄົນໃນ Seattle ແລະ ອື່ນໆອີກຫຼວງຫຼາຍ. ຂ້າພະເຈົ້າຫວັງວ່າຈະໄດ້ຮັບການສະໜັບສະໜູນຈາກທ່ານເຊັ່ນດຽວກັນ!

ກະລຸນາມອບບັດກຳນັນສະໜັບສະໜູນປະຊາທິປະໄຕຂອງທ່ານ ແລະ ເຂົ້າໄປທີ່ AlexisForSeattle.com ຖ້າຕ້ອງການຮຽນຮູ້ເພີ່ມເຕີມ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກຳລັງເຂົ້າຮ່ວມໂຄງການບັດກຳນັບສະໜັບສະໜູນປະຊາທິປະໄຕ.*



**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Dionne Foster

**ຊື່ແຄມເປນ:** Dionne ສຳລັບ Seattle

**ເວັບໄຊແຄມເປນ:** dionnefoster.com

**ຕຳແໜ່ງໃນເມືອງ:** ສະມາຊິກສະພາເທດສະບານເມືອງ Seattle #9

**ເບີໂທລະສັບແຄມເປນ:** 206-651-5493

ພວກເຮົາສົມຄວນທີ່ຈະມີຖະໜົນຫົນທາງທີ່ປອດໄພ, ທີ່ຢູ່ອາໄສທີ່ມີລາຄາບໍ່ແພງ ແລະ ຜູ້ນຳຂອງເມືອງ Seattle ທີ່ປົກປ້ອງສິດທິຂອງພວກເຮົາ ແລະ ເຄົາລົບສຽງຂອງພວກເຮົາ.

Dionne Foster ເປັນຜູ້ຊ່ຽວຊານດ້ານນະໂຍບາຍ, ຜູ້ນຳຊຸມຊົນ, ເຈົ້າໜ້າທີ່ສັງຄົມສົງເຄາະທີ່ໄດ້ຮັບການຝຶກອົບຮົມ ແລະ ເປັນແມ່ຜູ້ທີ່ໄດ້ໃຊ້ເວລາຫຼາຍກວ່າໜຶ່ງທົດສະວັດໃນການເຮັດໃຫ້ຊຸມຊົນຂອງພວກເຮົາມີຄວາມປອດໄພຂຶ້ນ, ຍືນຍົງຂຶ້ນ ແລະ ມີຄວາມສະເໝີພາບຫຼາຍຂຶ້ນ.
ລາວກຳລັງລົງສະໝັກຊິງຕຳແໜ່ງໃນສະພາເທດສະບານເມືອງເພື່ອສ້າງການນຳພາໃນທາງບວກນີ້ຢ່າງບໍ່ເຄີຍມີມາກ່ອນ ໂດຍການປັບທິດທາງຂອງສະພາເມືອງໃຫ້ມຸ່ງເນັ້ນໄປທີ່ການແກ້ໄຂບັນຫາຕາມລຳດັບຄວາມສຳຄັນ ແລະ ຄວາມຕ້ອງການເລັ່ງດ່ວນ, ບໍ່ແມ່ນຕາມວາລະສ່ວນບຸຄຄົນ.

ໃນຖານະຜູ້ອຳນວຍການບໍລິຫານຂອງ WA Progress Alliance, ລາວໄດ້ຊ່ວຍໃນການຜ່ານກົດໝາຍ ແລະ ຄຸ້ມຄອງການລົງທຶນໃນການດູແລເດັກ, ການສຶກສາລະດັບປະຖົມໄວ ແລະ ການກໍ່ສ້າງໂຮງຮຽນຢ່າງບໍ່ເຄີຍມີມາກ່ອນ ໂດຍຜ່ານການນຳພາຂອງລາວໃນການເກັບພາສີກຳໄລສ່ວນທຶນທົ່ວທັງລັດ ໂດຍເຮັດໃຫ້ແນ່ໃຈວ່າຄົນຮັ່ງມີຈ່າຍສ່ວນແບ່ງທີ່ຍຸດຕິທຳ ແລະ ແກ້ໄຂບັນຫາຄວາມສາມາດໃນການໃຊ້ຈ່າຍ ແລະ ຄວາມຈຳເປັນດ້ານເງິນທຶນ.

ໃນຖານະເປັນທີ່ປຶກສາດ້ານນະໂຍບາຍອາວຸໂສຂອງເມືອງ Seattle, Dionne ໄດ້ບໍລິຫານການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍເພື່ອປັບປຸງຄວາມປອດໄພສາທາລະນະ, ສ້າງໂອກາດໃຫ້ກັບເຍົາວະຊົນ ແລະ ບັນລຸເປົ້າໝາຍດ້ານສະພາບພູມອາກາດ. ທີ່ Seattle Foundation ລາວໄດ້ລົງທຶນໃນອົງການຈັດຕັ້ງຕ່າງໆທີ່ສ້າງກົນລະຍຸດດ້ານທີ່ຢູ່ອາໄສໃໝ່ ແລະ ສົ່ງເສີມຄວາມຈະເລີນທາງເສດຖະກິດ.

ດ້ວຍການສະໜັບສະໜູນຂອງທ່ານ, Dionne ຈະຊ່ວຍນຳພາເມືອງ Seattle ມາຮ່ວມມືກັນເພື່ອແກ້ໄຂສິ່ງທີ່ເປັນຄວາມທ້າທາຍລະດັບຊາດ ແລະ ຊຸກຍູ້ໃຫ້ເກີດຄວາມກ້າວໜ້າໃນທ້ອງຖິ່ນເພື່ອຊ່ວຍໃຫ້ທຸກຄົນຮູ້ສຶກປອດໄພ, ເປັນທີ່ຕ້ອນຮັບ ແລະ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອໃນເມືອງຂອງພວກເຮົາ. Dionne ແມ່ນຜູ້ສະໝັກພຽງຄົນດຽວໃນການແຂ່ງຂັນນີ້ທີ່ໄດ້ຮັບການຮັບຮອງໂດຍສະພາແຮງງານ MLK Labor Council.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກຳລັງເຂົ້າຮ່ວມໂຄງການບັດກຳນັນສະໜັບສະໜູນປະຊາທິປະໄຕ.*



**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Sara Nelson

**ຊື່ແຄມເປນ:** Sara Nelson ສໍາລັບສະພາເມືອງ

**ເວັບໄຊແຄມເປນ:** SaraForCityCouncil.com

**ຕໍາແໜ່ງໃນສະພາເມືອງ:** ສະມາຊິກສະພາເມືອງ Seattle ເຂດ 9 ບໍ່ແບ່ງເຂດ

**ເບີໂທລະສັບແຄມເປນ:** 206-821-6140

ຂ້ອຍແມ່ນ Sara Nelson, ສະມາຊິກສະພາທົ່ວເມືອງຂອງເຈົ້າ.

ເມື່ອສີ່ປີກ່ອນ ເມືອງຊີແອດເທິລປະສົບບັນຫາຫຼາຍຢ່າງ, ທັງອັດຕາການກໍ່ອາຊະຍາກໍາທີ່ເພີ່ມຂຶ້ນ, ການກາງເຕັ້ນຢູ່ຂອງຄົນບໍ່ມີເຮືອນໃນສວນສາທາລະນະຂອງພວກເຮົາ ແລະ ສະພາເມືອງທີ່ເບິ່ງແລ້ວຄືວ່າມີແຕ່ຄວາມສົນໃຈໃນການອອກຄໍາຖະແຫຼງຫຼາຍກວ່າການສ້າງຄວາມກ້າວໜ້າ. ຂ້າພະເຈົ້າຕ້ອງການປ່ຽນແປງສິ່ງນັ້ນ.

ໃນທີ່ສຸດພວກເຮົາກໍາລັງປ່ຽນທິດທາງໃນມື້ນີ້. ເມືອງຊີແອດເທິລກໍາລັງຈ້າງເຈົ້າໜ້າທີ່ຕໍາຫຼວດເພີ່ມຂຶ້ນຫຼາຍກວ່າທີ່ພວກເຮົາສູນເສຍກໍາລັງຕໍາຫຼວດເປັນຄັ້ງທໍາອິດນັບຕັ້ງແຕ່ປີ 2019. ພວກເຮົາກໍາລັງແກ້ໄຂບັນຫາການລະບາດຂອງຢາເຟນຕານິລໂດຍກົງໂດຍຂະຫຍາຍການຮ່ວມມືຂອງພວກເຮົາກັບ Evergreen Treatment Services (ໜ່ວຍງານບໍລິການປິ່ນປົວເອເວີກຣີນ) ທີ່ນໍາເອົາການປິ່ນປົວເຄື່ອນທີ່ມາໃຫ້ ແລະ ການຊ່ວຍເຫຼືອໃຫ້ກັບຜູ້ທີ່ກໍາລັງຕໍ່ສູ້ກັບອາການຕິດຢາເສບຕິດປະເພດສານສະກັດຈາກຝິ່ນໂດຍກົງ. ແລະ ເມື່ອທຸລະກິດໃນລະແວກໃກ້ຄຽງປະເຊີນກັບການບຸກຮຸກໂຈລະກໍາ, ພວກເຮົາໄດ້ສ້າງຕັ້ງກອງທຶນສ້ອມແປງຮ້ານຄ້າ (Storefront Repair Fund) ເພື່ອຊ່ວຍໃຫ້ບັນດາທຸລະກິດຕ່າງໆສາມາດເບີກຄ່າໃຊ້ຈ່າຍໃນການສ້ອມແປງຄືນໄດ້.

ທຸກຄົນສົມຄວນໄດ້ຮັບການເຂົ້າເຖິງກອງທຶນຟື້ນຟູແບບດຽວກັນກັບຂ້າພະເຈົ້າ. ນັ້ນແມ່ນເຫດຜົນທີ່ຂ້າພະເຈົ້າໄດ້ສຸມໃສ່ການສະໜອງການປິ່ນປົວຕາມຄວາມຕ້ອງການໂດຍບໍ່ເສຍຄ່າ, ໃນຂະນະທີ່ປັບປຸງການຕອບສະໜອງຕໍ່ເຫດສຸກເສີນທົ່ວເມືອງຂອງພວກເຮົາ.

ຂ້າພະເຈົ້າເຊື່ອໝັ້ນໃນການສົ່ງມອບຜົນໄດ້ຮັບ, ບໍ່ແມ່ນການໂຕ້ແຍ່ງຖົກຖຽງກັນທີ່ບໍ່ມີທີ່ສິ້ນສຸດ. ບໍ່ວ່າຈະເປັນການຊ່ວຍເຫຼືອໃຫ້ທຸລະກິດຂະໜາດນ້ອຍຈະເລີນເຕີບໂຕ ຫຼື ສະໜັບສະໜູນສະຖາບັນໃນຊຸມຊົນທີ່ເຮັດໃຫ້ເມືອງຂອງພວກເຮົາມີຊີວິດຊີວາ.

ສິ່ງທ້າທາຍຕ່າງໆທີ່ພວກເຮົາກໍາລັງປະເຊີນແມ່ນມີຄວາມຊັບຊ້ອນ, ແຕ່ຖ່າຮ່ວມມືກັນ ພວກເຮົາສາມາດສ້າງຄວາມກ້າວໜ້າທີ່ແທ້ຈິງໄດ້. ຂ້າພະເຈົ້າຈະຮູ້ສຶກເປັນກຽດຢ່າງຍິ່ງ, ຖ້າໄດ້ຮັບການສະໜັບສະໜູນຈາກທ່ານໃນການສືບຕໍ່ເຮັດວຽກນີ້.

*ຜູ້ສະໝັກຄົນນີ້ບໍ່ໄດ້ເຂົ້າຮ່ວມໃນໂຄງການບັດກໍານັບສະໜັບສະໜູນປະຊາທິປະໄຕ.*